# ເອກະສານຊ້ອນທ້າຍ 1 ຂ

## ສັນຍາທົ່ວໄປວ່າດ້ວຍການຄ້າດ້ານການບໍລິການ

**ພາກທີ I ຂອບເຂດ ແລະ ຄຳນິຍາມ**

ມາດຕາ 1 ຂອບເຂດ ແລະ ຄຳນິຍາມ

**ພາກທີ II ພັນທະ ແລະ ກົດລະບຽບທົ່ວໄປ**

ມາດຕາ II ການປະຕິບັດຕໍ່ປະຊາຊາດທີ່ໄດ້ຮັບອະນຸເຄາະຫຼາຍທີ່ສຸດ

ມາດຕາ III ການເປີດເຜີຍ

ມາດຕາ III ເພີ່ມການເປີດເຜີຍຂໍ້ມູນທີ່ເປັນຄວາມລັບ

ມາດຕາ IV ການມີສ່ວນຮ່ວມທີ່ເພີ່ມຂຶ້ນຂອງບັນດາປະເທດກຳລັງພັດທະນາ

ມາດຕາ V ການລວມກຸ່ມທາງດ້ານເສດຖະກິດ

ມາດຕາ V ເພີ່ມ ສັນຍາການຮ່ວມຕົວຂອງຕະຫຼາດແຮງງານ

ມາດຕາ VI ລະບຽບການພາຍໃນປະເທດ

ມາດຕາ VII ການຮັບຮູ້

ມາດຕາ VIII ການຜູກຂາດ ແລະ ຜູ້ໃຫ້ບໍລິການທີ່ໄດ້ຮັບສິດທິແຕ່ພຽງຜູ້ດຽວ

ມາດຕາ IX ການປະຕິບັດທາງທຸລະກິດ

ມາດຕາ X ມາດຕະການປົກປ້ອງໃນເວລາສຸກເສີນ

ມາດຕາ XI ການຊຳລະເງິນ ແລະ ການໂອນເງິນ

ມາດຕາ XII ຂໍ້ຈຳກັດເພື່ອການຮັກສາຮ່ວມການຊຳລະເງິນ

ມາດຕາ XIII ການຈັດຊື້ໂດຍລັດຖະບານ

ມາດຕາ XIV ຂໍ້ຍົກເວັ້ນທົ່ວໄປ

ມາດຕາ XIV ເພີ່ມ ຂໍ້ຍົກເວັ້ນດ້ານຄວາມໝັ້ນຄົງ

ມາດຕາ XV ການຖົມຊຸມ

**ພາກທີ III ຂໍ້ຜູກພັນສະເພາະ**

ມາດຕາ XVI ການເຂົ້າສູ່ຕະຫຼາດ

ມາດຕາ XVII ການປະຕິບັດແບບພາຍໃນຊາດ

ມາດຕາ XVIII ຂໍ້ຜູກພັນເພີ່ມຕື່ມ

**ພາກທີ IV ການເປີດເສລີແບບກ້າວໜ້າເປັນລຳດັບ**

ມາດຕາ XIX ການເຈລະຈາຂໍ້ຜູກພັນສະເພາະ

**ມາດຕາ XX** ຕາຕະລາງຂໍ້ຜູກພັນສະເພາະ

**ມາດຕາ XXI** ການດັດແກ້ຕາຕະລາງຂໍ້ຜູກພັນ

**ພາກທີ V ບົດບັນຍັດວ່າດ້ວຍສະຖາບັນ**

**ມາດຕາ XXII** ການປຶກສາຫາລື

**ມາດຕາ XXIII** ການແກ້ໄຂຂໍ້ຂັດແຍ້ງ ແລະ ການບັງຄັບປະຕິບັດ

**ມາດຕາ XXIV** ສະພາດ້ານ ການຄ້າດ້ານການບໍລິການ

**ມາດຕາ XXV** ການຮ່ວມມືດ້ານວິຊາການ

**ມາດຕາ XXVI** ການພົວພັນກັບອົງການຈັດຕັ້ງສາກົນອື່ນໆ

**ພາກທີ VI ບົດບັນຍັດສຸດທ້າຍ**

**ມາດຕາ XXVII** ການປະຕິເສດຜົນປະໂຫຍດ

**ມາດຕາ XXVIII** ຄໍາຈໍາກັດຄວາມ

**ມາດຕາ XXIX** ເອກະສານຊ້ອນທ້າຍ

**ເອກະສານຊ້ອນທ້າຍ**

ເອກະສານຊ້ອນທ້າຍ ວ່າດ້ວຍການຍົກເວັ້ນຈາກມາດຕາ II

ເອກະສານຊ້ອນທ້າຍ ວ່າດ້ວຍການເຄື່ອນຍ້າຍບຸກຄົນທໍາມະດາ ທີ່ໃຫ້ການບໍລິການພາຍໃຕ້ສັນຍາ

ເອກະສານຊ້ອນທ້າຍ ວ່າດ້ວຍການບໍລິການຂົນສົ່ງທາງອາກາດ

ເອກະສານຊ້ອນທ້າຍ ວ່າດ້ວຍການບໍລິການດ້ານການເງິນ

ເອກະສານຊ້ອນທ້າຍທີສອງ ວ່າດ້ວຍການບໍລິການດ້ານການເງິນ

ເອກະສານຊ້ອນທ້າຍ ວ່າດ້ວຍການເຈລະຈາການບໍລິການຂົນສົ່ງທາງທະເລ

ເອກະສານຊ້ອນທ້າຍ ວ່າດ້ວຍການໂທລະຄົມະນາຄົມ

ເອກະສານຊ້ອນທ້າຍ ວ່າດ້ວຍການເຈລະຈາເລື່ອງການໂທລະຄົມະນາຄົມພື້ນຖານ

# ເອກະສານຊ້ອນທ້າຍ 1 ຂ

# ສັນຍາທົ່ວໄປວ່າດ້ວຍການຄ້າດ້ານການບໍລິການ

ບັນດາສະມາຊິກ,

*ໂດຍຮັບຮູ້ເຖິງ* ຄວາມສຳຄັນທີ່ເພີ່ມຂຶ້ນຂອງການຄ້າດ້ານການບໍລິການ ທີ່ມີຕໍ່ການຈະເລີນເຕີບໂຕ ແລະ ການພັດທະນາຂອງເສດຖະກິດໂລກ;

*ດ້ວຍຄວາມມຸ້ງຫວັງ* ທີ່ຈະສ້າງໃຫ້ມີຂອບວຽກພະຫຸພາຄີ ດ້ານຫຼັກການ ແລະ ລະບຽບການສຳລັບການຄ້າດ້ານການບໍລິການ ເພື່ອຂະຫຍາຍການຄ້າປະເພດດັ່ງກ່າວ ພາຍໃຕ້ເງື່ອນໄຂຂອງຄວາມໂປ່ງໃສ ແລະ ການເປີດເສລີແບບກ້າວໜ້າເປັນລຳດັບ ແລະ ເພື່ອເປັນພາຫະນະໃນການສົ່ງເສີມການຈະເລີນເຕີບໂຕທາງເສດຖະກິດຂອງຄູ່ຄ້າທັງປວງ ແລະ ການພັດທະນາຂອງບັນດາປະເທດກຳລັງພັດທະນາ;

*ດ້ວຍຄວາມປາດຖະໜາ* ໃນການບັນລຸເຖິງລະດັບການເປີດເສລີການຄ້າດ້ານການບໍລິການທີ່ສູງຂຶ້ນແບບກ້າວໜ້າເປັນລຳດັບໂດຍໄວ ໂດຍຜ່ານການເຈລະຈາພະຫຸພາຄີໃນຫຼາຍຮອບທີ່ຕິດຕໍ່ກັນທີ່ແນໃສ່ ເພື່ອສົ່ງເສີມຜົນປະໂຫຍດຂອງຜູ້ເຂົ້າຮ່ວມເຈລະຈາທັງປວງ ບົນພື້ນຖານຂອງຜົນປະໂຫຍດຮ່ວມກັນ ແລະ ເພື່ອຮັບປະກັນຄວາມສົມດຸນທັງໝົດຂອງສິດທິ ແລະ ພັນທະ, ແລະໃຫ້ຄວາມຢຶດໝັ້ນຕໍ່ວັດຖຸປະສົງຂອງນະໂຍບາຍແຫ່ງຊາດ ທີ່ມີຢູ່;

*ໂດຍຮັບຮູ້ເຖິງ* ສິດທິຂອງສະມາຊິກທີ່ຈະອອກລະບຽບການ, ແລະ ນຳໃຊ້ລະບຽບການໃໝ່ໆກັບການໃຫ້ການບໍລິການພາຍໃນດິນແດນຂອງຕົນ ເພື່ອບັນລຸວັດຖຸປະສົງຂອງນະໂຍບາຍແຫ່ງຊາດ ແລະ ຄວາມຈຳເປັນພິເສດ ຂອງປະເທດກຳລັງພັດທະນາ ທີ່ຈະໃຊ້ສິດທິນີ້ ຊຶ່ງລະດັບການພັດທະນາລະບຽບການຕ່າງໆກ່ຽວກັບການບໍລິການທີ່ມີຢູ່ ແມ່ນບໍ່ເທົ່າທຽມກັນໃນແຕ່ລະປະເທດ;

*ດ້ວຍຄວາມປາດຖະໜາ* ທີ່ຈະອຳນວຍຄວາມສະດວກໃນການມີສ່ວນຮ່ວມທີ່ເພີ່ມຂຶ້ນ ຂອງປະເທດກຳລັງພັດທະນາໃນການທຸລະກິດດ້ານການບໍລິການ ແລະ ການຂະຫຍາຍການສົ່ງອອກດ້ານການບໍລິການຂອງປະເທດເຫຼົ່ານັ້ນ, ໂດຍລວມເຖິງ ການເຮັດໃຫ້ຄວາມສາມາດໃນການບໍລິການພາຍໃນປະເທດ, ປະສິດທິພາບ ແລະ ຄວາມສາມາດໃນການແຂ່ງຂັນຂອງຕົນ ແຂງແກ່ນຂຶ້ນ ເປັນຕົ້ນ;

*ໂດຍໃຫ້ການພິຈາລະນາເປັນພິເສດ* ຕໍ່ຄວາມຫຍຸ້ງຍາກທີ່ໜັກໜ່ວງຂອງບັນດາປະເທດດ້ອຍພັດທະນາ ເມື່ອພິຈາລະນາເຖິງສະພາບການພິເສດດ້ານເສດຖະກິດ ແລະ ຄວາມຈຳເປັນທາງການພັດທະນາ, ການຄ້າ ແລະ ການເງິນ ຂອງປະເທດເຫຼົ່ານັ້ນ;

ໄດ້ຕົກລົງກັນ ດັ່ງຕໍ່ໄປນີ້:

## ພາກທີ 1

ຂອບເຂດ ແລະ ຄຳນິຍາມ

## ມາດຕາ I

## ຂອບເຂດ ແລະ ຄຳນິຍາມ

1. ສັນຍາສະບັບນີ້ ຖືກນຳໃຊ້ສຳລັບບັນດາມາດຕະການຕ່າງໆຂອງບັນດາປະເທດສະມາຊິກ ທີ່ມີຜົນກະທົບຕໍ່ການຄ້າດ້ານການບໍລິການ.

2. ເພື່ອຈຸດປະສົງຂອງສັນຍາສະບັບນີ້, ການຄ້າດ້ານການບໍລິການໝາຍເຖິງ ການໃຫ້ບໍລິການ:

(ກ) ຈາກດິນແດນຂອງປະເທດສະມາຊິກໜຶ່ງເຂົ້າໄປຍັງດິນແດນຂອງປະເທດສະມາຊິກອື່ນໃດໜຶ່ງ;

(ຂ) ໃນດິນແດນຂອງປະເທດສະມາຊິກໜຶ່ງ ແກ່ຜູ້ຊົມໃຊ້ການບໍລິການຂອງປະເທດສະມາຊິກອື່ນໃດໜຶ່ງ;

(ຄ) ໂດຍຜູ້ໃຫ້ການບໍລິການຂອງປະເທດສະມາຊິກໜຶ່ງ, ໂດຍຜ່ານຕົວແທນທາງການຄ້າໃນດິນແດນຂອງປະເທດສະມາຊິກອື່ນໃດໜຶ່ງ;

(ງ) ໂດຍຜູ້ໃຫ້ການບໍລິການຂອງປະເທດສະມາຊິກໜຶ່ງ, ໂດຍຜ່ານບຸກຄົນທຳມະດາຂອງປະເທດສະມາຊິກດັ່ງກ່າວ ໃນດິນແດນຂອງປະເທດສະມາຊິກອື່ນໃດໜຶ່ງ.

3. ເພື່ອຈຸດປະສົງຂອງສັນຍາສະບັບນີ້:

(ກ) " ບັນດາມາດຕະການຕ່າງໆຂອງບັນດາສະມາຊິກ " ໝາຍເຖິງ ມາດຕະການທີ່ນຳໃຊ້ໂດຍ:

(1) ລັດຖະບານ ແລະ ອົງການທີ່ມີສິດອຳນາດຂອງສູນກາງ, ພາກ ຫຼື ທ້ອງຖິ່ນ; ແລະ

(2) ອົງການທີ່ບໍ່ແມ່ນຂອງລັດຖະບານ ຊຶ່ງນຳໃຊ້ສິດອຳນາດທີ່ໄດ້ຮັບມອບໝາຍຈາກລັດຖະບານ ຫຼື ອົງການທີ່ມີສິດອຳນາດຂອງສູນກາງ, ພາກ ຫຼື ທ້ອງຖິ່ນ.

ໃນການປະຕິບັດຕາມພັນທະ ແລະ ຂໍ້ຜູກພັນຂອງຕົນພາຍໃຕ້ສັນຍາສະບັບນີ້, ແຕ່ລະ ປະເທດສະມາຊິກ ຈະດຳເນີນມາດຕະການທີ່ສົມເຫດສົມຜົນເທົ່າທີ່ຕົນມີຢູ່ ເພື່ອຮັບປະກັນວ່າ ລັດຖະບານ ແລະ ອົງການທີ່ມີສິດອຳນາດໃນພາກຕ່າງໆ ແລະ ທ້ອງຖິ່ນ ແລະ ອົງການທີ່ບໍ່ແມ່ນລັດຖະບານ ໄດ້ປະຕິບັດຕາມພັນທະ ແລະ ຂໍ້ຜູກພັນ ພາຍໃນດິນແດນຂອງຕົນ;

(ຂ) " ການບໍລິການ " ຈະລວມເຖິງບໍລິການໃນຂະແໜງການໃດໜຶ່ງ ນອກຈາກການບໍລິການທີ່ສະໜອງ ຫຼື ໂດຍປະຕິບັດຕາມສິດອຳນາດຂອງລັດຖະບານ;

(ຄ) " ການບໍລິການທີ່ສະໜອງ ຫຼື ໂດຍປະຕິບັດຕາມສິດອຳນາດຂອງລັດຖະບານ " ໝາຍເຖິງການບໍລິການໃດໜຶ່ງ ຊຶ່ງບໍ່ໄດ້ສະໜອງບົນພື້ນຖານຂອງການເຮັດທຸລະກິດ ຫຼື ໃນການແຂ່ງຂັນກັບຜູ້ໃຫ້ບໍລິການໃດໜຶ່ງ ຫຼື ຫຼາຍກວ່ານັ້ນ.

# ພາກທີ II
## ພັນທະ ແລະ ກົດລະບຽບທົ່ວໄປ

### ມາດຕາ II
### ການປະຕິບັດຕໍ່ປະຊາຊາດທີ່ໄດ້ຮັບອະນຸເຄາະຫຼາຍທີ່ສຸດ

1. ອີງຕາມມາດຕະການໃດກໍຕາມທີ່ໄດ້ລະບຸໄວ້ໃນສັນຍາສະບັບນີ້, ແຕ່ລະປະເທດສະມາຊິກ ຈະໃຫ້ການປະຕິບັດຕໍ່ການບໍລິການ ແລະ ຜູ້ໃຫ້ບໍລິການຂອງສະມາຊິກອື່ນໃດໜຶ່ງ ທີ່ບໍ່ຕໍ່າກວ່າທີ່ຕົນໃຫ້ການປະຕິບັດຕໍ່ການບໍລິການ ແລະ ຜູ້ໃຫ້ການບໍລິການທີ່ຄ້າຍຄຽງກັນຂອງປະເທດອື່ນໃດໜຶ່ງ ໃນທັນທີ ແລະ ໂດຍບໍ່ມີເງື່ອນໄຂ.

2. ປະເທດສະມາຊິກອາດຮັກສາມາດຕະການ ທີ່ບໍ່ສອດຄ່ອງກັບວັກທີ 1 ໄດ້ ຫາກໄດ້ມີການລະບຸມາດຕະການດັ່ງກ່າວໄວ້ ໃນເອກະສານຊ້ອນທ້າຍວ່າດ້ວຍຂໍ້ຍົກເວັ້ນ ຕາມມາດຕາ II, ແລະ ເປັນໄປຕາມເງື່ອນໄຂຂອງເອກະສານຊ້ອນທ້າຍນັ້ນ.

3. ບັນດາບົດບັນຍັດຂອງສັນຍາສະບັບນີ້ ຈະບໍ່ຖືກຕີຄວາມໄປໃນທາງທີ່ຈະຫ້າມປະເທດສະມາຊິກໃດໜຶ່ງ ຈາກການໃຫ້ປະໂຫຍດແກ່ປະເທດເພື່ອນບ້ານ ເພື່ອອໍານວຍຄວາມສະດວກໃນການແລກປ່ຽນ ຊຶ່ງຈໍາກັດຢູ່ພາຍໃນເຂດຊາຍແດນທີ່ຕິດກັນ ສໍາລັບການບໍລິການຊຶ່ງຜະລິດ ແລະ ການບໍລິໂພກໃນທ້ອງຖິ່ນຂອງທັງສອງ.

### ມາດຕາ III
### ຄວາມໂປ່ງໃສ

1. ຍົກເວັ້ນໃນກໍລະນີສຸກເສີນ, ແຕ່ລະປະເທດສະມາຊິກຈະຈັດພິມໂຄສະນາບັນດາມາດຕະການທັງໝົດ ທີ່ກ່ຽວຂ້ອງກັບການປະຕິບັດໂດຍທົ່ວໄປ ທີ່ກ່ຽວພັນກັບ ຫຼື ມີຜົນກະທົບຕໍ່ການດໍາເນີນການຕາມສັນຍາສະບັບນີ້ໂດຍໄວ ແລະ ຢ່າງຊ້າທີ່ສຸດກ່ອນທີ່ມາດຕະການນັ້ນ ຈະມີຜົນບັງຄັບໃຊ້. ບັນດາສັນຍາລະຫວ່າງປະເທດທີ່ກ່ຽວຂ້ອງກັບ ຫຼື ມີຜົນກະທົບຕໍ່ການຄ້າດ້ານການບໍລິການ ຊຶ່ງປະເທດສະມາຊິກດັ່ງກ່າວຮ່ວມລົງນາມ ຈະຕ້ອງຖືກຈັດພິມໂຄສະນາເຊັ່ນດຽວກັນ.

2. ໃນກໍລະນີທີ່ການພິມໂຄສະນາທີ່ກ່າວໄວ້ໃນວັກ 1 ບໍ່ສາມາດປະຕິບັດໄດ້, ຂໍ້ມູນດັ່ງກ່າວຈະຕ້ອງມີໄວ້ຢ່າງເປີດເຜີຍ ແລະ ທົ່ວໄປ.

3. ແຕ່ລະປະເທດສະມາຊິກ ຈະແຈ້ງໃຫ້ສະພາການຄ້າດ້ານການບໍລິການຮູ້ ໂດຍໄວ ແລະ ຢ່າງໜ້ອຍປີລະໜຶ່ງຄັ້ງ ເຖິງການນໍາອອກໃຊ້ ຫຼື ການປ່ຽນແປງໃດໜຶ່ງຂອງກົດໝາຍ, ລະບຽບການ ຫຼື ແນວທາງການບໍລິຫານທີ່ມີ ທີ່ຈະມີຜົນກະທົບທີ່ສໍາຄັນຕໍ່ການທຸລະກິດດ້ານການບໍລິການ ຊຶ່ງເປັນຂໍ້ຜູກພັນສະເພາະພາຍໃນສັນຍາສະບັບນີ້.

4. ແຕ່ລະປະເທດສະມາຊິກ ຈະຕອບສະໜອງໂດຍໄວກ່ຽວກັບຂໍ້ມູນສະເພາະ ດ້ານມາດຕະການໃດໆຂອງຕົນ ກ່ຽວກັບການປະຕິບັດໂດຍທົ່ວໄປ ຫຼື ຕາມສັນຍາລະຫວ່າງປະເທດ ຕາມຄວາມໝາຍຂອງວັກ 1 ຊຶ່ງປະເທດສະມາຊິກອື່ນໃດໜຶ່ງໄດ້ສະເໜີມາ. ແຕ່ລະປະເທດສະມາຊິກ ຈະຈັດຕັ້ງຈຸດຕອບຂໍ້ສັກຖາມໜຶ່ງແຫ່ງ, ຫຼື ຫຼາຍກວ່ານັ້ນ, ເພື່ອສະໜອງຂໍ້ມູນສະເພາະແກ່ປະເທດສະມາຊິກອື່ນຕາມການສະເໜີ, ກ່ຽວກັບບັນຫາທັງໝົດດັ່ງກ່າວ ກໍຄືບັນຫາຕ່າງໆ ຕາມທີ່ໄດ້ກໍານົດວ່າຕ້ອງມີການແຈ້ງການ ດັ່ງທີ່

ໄດ້ລະບຸໄວ້ໃນ ວັກທີ 3. ຈຸດຕອບຂໍ້ສັກຖາມດັ່ງກ່າວ ຈະຖືກຕັ້ງຂຶ້ນພາຍໃນ 2 ປີ ເລີ່ມຈາກວັນທີ ທີ່ສັນຍາ ຈັດຕັ້ງ ອົງການການຄ້າໂລກມີຜົນບັງຄັບໃຊ້ (ໃນສັນຍານີ້ເອີ້ນວ່າ " ສັນຍາ WTO " ). ປະເທດກໍາລັງພັດທະນາແຕ່ລະປະເທດ ອາດຈະໄດ້ຮັບການໂຍະຍານທີ່ເໝາະສົມ ຕາມການເຫັນດີຮ່ວມກັນ ກ່ຽວກັບໄລຍະເວລາທີ່ຈະຈັດຕັ້ງຈຸດຕອບຂໍ້ສັກຖາມດັ່ງກ່າວ. ຈຸດຕອບຂໍ້ສັກຖາມນັ້ນບໍ່ຈໍາເປັນຕ້ອງເປັນສະຖານທີ່ທີ່ລວບລວມບັນດາກົດໝາຍ ແລະ ລະບຽບການຕ່າງໆໄວ້.

5. ປະເທດສະມາຊິກໃດໜຶ່ງ ອາດແຈ້ງການໄປຍັງ ສະພາການຄ້າດ້ານການບໍລິການ ກ່ຽວກັບມາດຕະການໃດໜຶ່ງ ທີ່ປະເທດສະມາຊິກອື່ນຍອມປະຕິບັດ, ຊຶ່ງຕົນພິຈາລະນາແລ້ວເຫັນວ່າ ມີຜົນກະທົບຕໍ່ການດໍາເນີນການຂອງສັນຍາສະບັບນີ້.

## ມາດຕາ III ເພີ່ມ

## ການເປີດເຜີຍຂໍ້ມູນທີ່ເປັນຄວາມລັບ

ບໍ່ມີບົດບັນຍັດໃດໃນສັນຍາສະບັບນີ້ ທີ່ຈະກໍານົດໃຫ້ປະເທດສະມາຊິກໃດໜຶ່ງ ສະໜອງຂໍ້ມູນທີ່ເປັນຄວາມລັບ, ຊຶ່ງການເປີດເຜີຍນັ້ນ ຈະຂັດຂວາງການບັງຄັບປະຕິບັດຕາມກົດໝາຍ, ຫຼື ບໍ່ດັ່ງນັ້ນ ກໍອາດຂັດຕໍ່ຜົນປະໂຫຍດສາທາລະນະ, ຫຼື ຈະເຮັດໃຫ້ເສື່ອມເສຍຜົນປະໂຫຍດໃນດ້ານທຸລະກິດທີ່ຖືກຕ້ອງຕາມກົດໝາຍ ຂອງວິສາຫະກິດໃດໜຶ່ງ ໂດຍສະເພາະ ບໍ່ວ່າຈະເປັນວິສາຫະກິດມະຫາຊົນ ຫຼື ວິສາຫະກິດເອກະຊົນ.

## ມາດຕາ IV

## ການມີສ່ວນຮ່ວມທີ່ເພີ່ມຂຶ້ນຂອງບັນດາປະເທດກໍາລັງພັດທະນາ

1. ການມີສ່ວນຮ່ວມທີ່ເພີ່ມຂຶ້ນຂອງປະເທດສະມາຊິກ ຊຶ່ງເປັນປະເທດກໍາລັງພັດທະນາ ໃນການຄ້າຂອງໂລກ ຈະໄດ້ຮັບການສົ່ງເສີມ ຜ່ານຂໍ້ຜູກພັນສະເພາະທີ່ໄດ້ເຈລະຈາໂດຍປະເທດສະມາຊິກຕ່າງໆ ຕາມມາດຕາ III ແລະ IV ຂອງສັນຍາສະບັບນີ້, ກ່ຽວກັບ:

(ກ) ການສົ່ງເສີມຄວາມສາມາດຂອງການບໍລິການ ພາຍໃນປະເທດຂອງຕົນ ແລະ ປະສິດທິພາບ ແລະ ຄວາມສາມາດໃນການແຂ່ງຂັນ ໂດຍຜ່ານການເຂົ້າເຖິງເຕັກໂນໂລຊີ ບົນພື້ນຖານຂອງການເຮັດທຸລະກິດ;

(ຂ) ການປັບປຸງການເຂົ້າເຖິງຊ່ອງທາງການຈໍາໜ່າຍ ແລະ ເຄືອຂ່າຍຂໍ້ມູນ; ແລະ

(ຄ) ການເປີດເສລີຕະຫຼາດໃນຫຼາຍຂະແໜງການ ແລະ ຮູບແບບຂອງການໃຫ້ການບໍລິການສົ່ງອອກ ທີ່ມີຜົນປະໂຫຍດຕໍ່ພວກເຂົາ.

2. ປະເທດສະມາຊິກທີ່ເປັນປະເທດພັດທະນາແລ້ວ ແລະ ປະເທດສະມາຊິກອື່ນທີ່ເປັນໄປໄດ້, ຈະຈັດຕັ້ງບ່ອນຕິດຕໍ່ພົວພັນ ພາຍໃນ 2 ປີ ເລີ່ມຈາກວັນທີ ທີ່ສັນຍາ WTO ມີຜົນບັງຄັບໃຊ້ ເພື່ອອໍານວຍຄວາມສະດວກແກ່ຜູ້ໃຫ້ບໍລິການຂອງປະເທດສະມາຊິກ ຊຶ່ງເປັນປະເທດກໍາລັງພັດທະນາ ໃນການເຂົ້າເຖິງຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບຕະຫຼາດຂອງຕົນ, ກ່ຽວກັບ:

(ກ) ຮູບແບບທາງດ້ານເຕັກນິກ ແລະ ທຸລະກິດຂອງການໃຫ້ບໍລິການ;

(ຂ) ການລົງທະບຽນ, ການຮັບຮູ້ ແລະ ການໄດ້ຮັບຄຸນສົມບັດທາງວິຊາຊີບ; ແລະ

(ຄ) ເຕັກໂນໂລຊີດ້ານການບໍລິການທີ່ມີຢູ່.

3. ປະເທດສະມາຊິກທີ່ເປັນປະເທດດ້ອຍພັດທະນາ ຈະໄດ້ຮັບບຸລິມະສິດພິເສດ ໃນການດຳເນີນການຕາມວັກ 1 ແລະ 2. ປະເທດດ້ອຍພັດທະນາຈະໄດ້ຮັບການພິຈາລະນາເປັນພິເສດ ໃນຖານະທີ່ມີຄວາມຫຍຸ້ງຍາກຢ່າງໜັກໜ່ວງ ໃນການຍອມຮັບຂໍ້ຜູກພັນສະເພາະທີ່ໄດ້ເຈລະຈາໄວ້ ໂດຍຄຳນຶງເຖິງສະພາບການ ທາງດ້ານເສດຖະກິດທີ່ພິເສດ ແລະ ຄວາມຕ້ອງການດ້ານການເງິນ, ການຄ້າ ແລະ ການພັດທະນາຂອງປະເທດເຫຼົ່ານັ້ນ.

## ມາດຕາ V

## ການລວມກຸ່ມທາງເສດຖະກິດ

1. ສັນຍາສະບັບນີ້ ຈະບໍ່ຫ້າມປະເທດສະມາຊິກໃດ ຈາກການເປັນຄູ່ພາຄີ ຫຼື ເຂົ້າຮ່ວມໃນສັນຍາເປີດເສລີການຄ້າດ້ານການບໍລິການ ລະຫວ່າງຄູ່ພາຄີຂອງສັນຍາດັ່ງກ່າວ, ຫາກສັນຍາດັ່ງກ່າວ:

(ກ) ກວມເອົາຂະແໜງການຕ່າງໆຫຼາຍພໍຄວນ[115] , ແລະ

(ຂ) ກຳນົດບໍ່ໃຫ້ມີ ຫຼື ຍົກເລີກການປະຕິບັດທັງໝົດທີ່ມີການຈຳແນກໂດຍພື້ນຖານ, ຕາມຄວາມໝາຍຂອງມາດຕາ XVII ລະຫວ່າງຄູ່ພາຄີ, ໃນບັນດາຂະແໜງການທີ່ລວມຢູ່ໃນວັກຍ່ອຍ (ກ), ໂດຍ:

(1) ການຍົກເລີກມາດຕະການທີ່ມີລັກສະນະຈຳແນກທີ່ມີຢູ່, ແລະ/ຫຼື

(2) ການຫ້າມໃຊ້ມາດຕະການໃໝ່ທີ່ມີລັກສະນະຈຳແນກ ຫຼື ມາດຕະການທີ່ມີລັກສະນະຈຳແນກຫຼາຍຂຶ້ນ, ບໍ່ວ່າຈະໃນໄລຍະທີ່ສັນຍານັ້ນ ມີຜົນບັງຄັບໃຊ້ ຫຼື ບົນພື້ນ ຖານຂອງກຳນົດເວລາທີ່ສົມເຫດສົມຜົນ, ຍົກເວັ້ນມາດຕະການທີ່ໄດ້ຮັບອະນຸຍາດ ພາຍໃຕ້ມາດຕາ 11, 12, 16, ແລະ 14 ເພີ່ມ.

2. ໃນການປະເມີນວ່າ ເງື່ອນໄຂຕ່າງໆພາຍໃຕ້ວັກ 1 (ຂ) ຈະຖືກປະຕິບັດ ຫຼື ບໍ່, ອາດຈະຕ້ອງພິຈາລະນາ ເຖິງຄວາມສຳພັນ ຂອງສັນຍາທີ່ມີຕໍ່ຂັ້ນຕອນທີ່ກວ້າງຂວາງກວ່າເກົ່າ ຂອງການລວມກຸ່ມທາງເສດຖະກິດ ຫຼື ການເປີດເສລີທາງການຄ້າລະຫວ່າງປະເທດທີ່ກ່ຽວຂ້ອງ.

3. (ກ)ໃນກໍລະນີທີ່ປະເທດກຳລັງພັດທະນາເປັນພາຄີຂອງສັນຍາປະເພດທີ່ກ່າວເຖິງໃນວັກ 1, ຈະຕ້ອງກຳນົດໃຫ້ມີການໂຍະຍານດ້ານເງື່ອນໄຂທີ່ລະບຸໄວ້ໃນວັກ 1, ໂດຍສະເພາະກ່ຽວກັບວັກຍ່ອຍ (ຂ), ຕາມລຳດັບການພັດທະນາຂອງປະເທດທີ່ກ່ຽວຂ້ອງ, ທັງກ່ຽວກັບທຸກຂະແໜງການ ແລະ ໃນແຕ່ລະຂະແໜງການ ແລະ ຂະແໜງການຍ່ອຍ.

(ຂ) ໂດຍບໍ່ຄຳນຶງເຖິງວັກ6,ໃນກໍລະນີທີ່ສັນຍາທີ່ກ່າວເຖິງໃນວັກ1 ກ່ຽວຂ້ອງກັບປະເທດກຳລັງພັດທະນາເທົ່ານັ້ນ, ອາດມີການໃຫ້ການປະຕິບັດໃນລັກສະນະທີ່ເປັນການອະນຸເຄາະຫຼາຍກວ່າ ແກ່ນິຕິບຸກຄົນ ຊຶ່ງບຸກຄົນທຳມະດາຂອງພາຄີຂອງສັນຍານັ້ນເປັນຜູ້ວ່າຈ້າງ ຫຼື ຄວບຄຸມ.

---

[115] ເງື່ອນໄຂນີ້ ໝາຍເຖິງຈຳນວນຂອງຂະແໜງການ, ບໍລິມາດການຄ້າ ທີ່ໄດ້ຮັບຜົນກະທົບ ແລະຮູບແບບຂອງການບໍລິການ. ເພື່ອໃຫ້ເປັນໄປຕາມເງື່ອນໄຂນີ້, ສັນຍານີ້ບໍ່ຄວນກຳນົດໄວ້ລ່ວງໜ້າ ໃນການຍົກເວັ້ນຮູບແບບໃດໆຂອງການບໍລິການ.

4. ສັນຍາໃດໆທີ່ກ່າວເຖິງໃນວັກ 1 ຈະໄດ້ຮັບການກໍານົດຮູບແບບ ເພື່ອອໍານວຍຄວາມສະດວກຕໍ່ການຄ້າລະຫວ່າງພາຄີຂອງສັນຍານັ້ນ ແລະ, ຕໍ່ກັບປະເທດສະມາຊິກທີ່ຢູ່ນອກສັນຍາດັ່ງກ່າວ ຈະບໍ່ມີການເພີ່ມລະດັບລວມຂອງອຸປະສັກຕໍ່ການຄ້າດ້ານການບໍລິການພາຍໃນແຕ່ລະຂະແໜງການຫຼື ຂະແໜງການຍ່ອຍ ເມື່ອປຽບທຽບກັບລະດັບທີ່ຖືກປະຕິບັດກ່ອນທີ່ຈະມີສັນຍານັ້ນ.

5. ຖ້າວ່າໃນການລົງລາຍເຊັນ, ການຂະຫຍາຍຂອບເຂດ ຫຼື ການດັດແກ້ທີ່ສໍາຄັນຂອງສັນຍາໃດໜຶ່ງ ຕາມວັກ 1, ປະເທດສະມາຊິກມີຄວາມຕັ້ງໃຈທີ່ຈະຖອນໂຕ ຫຼື ດັດແກ້ຂໍ້ຜູກພັນສະເພາະ ທີ່ບໍ່ສອດຄ່ອງກັບຂໍ້ກໍານົດ ແລະ ເງື່ອນໄຂທີ່ລະບຸໄວ້ໃນຕາຕະລາງຂອງຕົນ, ປະເທດສະມາຊິກນັ້ນຈະຕ້ອງແຈ້ງການ ກ່ຽວກັບການດັດແກ້ ຫຼື ການຖອນຕົນ ດັ່ງກ່າວ ເປັນການລ່ວງໜ້າຢ່າງໜ້ອຍ 90 ວັນ ແລະຂັ້ນຕອນດໍາເນີນການທີ່ລະບຸໄວ້ໃນວັກ 2, 3 ແລະ 4 ຂອງມາດຕາ 21 ຈະຖືກນໍາມາບັງຄັບໃຊ້.

6. ຜູ້ໃຫ້ການບໍລິການຂອງປະເທດສະມາຊິກອື່ນໃດໜຶ່ງ ຊຶ່ງເປັນນິຕິບຸກຄົນທີ່ຖືກກໍ່ຕັ້ງຂຶ້ນພາຍໃຕ້ກົດໝາຍຂອງພາຄີ ຂອງສັນຍາທີ່ກ່າວເຖິງໃນວັກ 1 ຈະມີສິດທີ່ຈະໄດ້ຮັບການປະຕິບັດ ທີ່ໃຫ້ພາຍໃຕ້ສັນຍານັ້ນ, ຫາກຜູ້ໃຫ້ການບໍລິການນັ້ນ ເຂົ້າຮ່ວມໃນການດໍາເນີນການທາງດ້ານທຸລະກິດທີ່ສໍາຄັນໃນດິນແດນຂອງພາຄີຂອງສັນຍາດັ່ງກ່າວ.

7. (ກ) ບັນດາປະເທດສະມາຊິກທີ່ເປັນພາຄີຂອງສັນຍາໃດໆທີ່ກ່າວເຖິງໃນວັກ 1 ຈະຕ້ອງແຈ້ງການ ໃຫ້ສະພາການຄ້າດ້ານການບໍລິການຮູ້ໂດຍໄວ ກ່ຽວກັບສັນຍານັ້ນ ແລະ ກ່ຽວກັບການຂະຫຍາຍຂອບເຂດ ຫຼືການດັດແກ້ໃດໆ ທີ່ສໍາຄັນຕໍ່ສັນຍາດັ່ງກ່າວ. ປະເທດສະມາຊິກນັ້ນ ຍັງຈະຕ້ອງສະໜອງຂໍ້ມູນຕ່າງໆ ທີ່ກ່ຽວຂ້ອງແກ່ສະພາການຄ້າດ້ານການບໍລິການ ຕາມທີ່ອາດຖືກສະເໜີຈາກສະພາ. ສະພາອາດຈັດຕັ້ງໜ່ວຍປະຕິບັດງານຂຶ້ນ ເພື່ອກວດກາ ສັນຍານັ້ນ ຫຼື ກວດກາການຂະຫຍາຍຂອບເຂດ ຫຼືການດັດແກ້ສັນຍານັ້ນ ແລະ ເພື່ອລາຍງານຕໍ່ສະພາກ່ຽວກັບຄວາມສອດຄ່ອງຂອງສັນຍາດັ່ງກ່າວ ພາຍໃຕ້ມາດຕານີ້.

(ຂ) ປະເທດສະມາຊິກຊຶ່ງເປັນພາຄີຂອງສັນຍາໃດໆ ທີ່ກ່າວເຖິງໃນວັກ 1 ຊຶ່ງໄດ້ມີການປະຕິບັດຕາມ ບົນພື້ນຖານຂອງຂອບຂ່າຍດ້ານເວລາ ຈະຕ້ອງລາຍງານເປັນແຕ່ລະໄລຍະ ຕໍ່ສະພາການຄ້າດ້ານການບໍລິການ ກ່ຽວກັບ ການປະຕິບັດຕາມສັນຍາດັ່ງກ່າວ. ສະພາອາດຈັດຕັ້ງໜ່ວຍປະຕິບັດງານ ເພື່ອກວດກາບົດລາຍງານນັ້ນ ຖ້າພິຈາລະນາເຫັນວ່າຈໍາເປັນຕ້ອງມີໜ່ວຍປະຕິບັດງານດັ່ງກ່າວ.

(ຄ) ບົນພື້ນຖານຂອງບົດລາຍງານຂອງໜ່ວຍປະຕິບັດງານທີ່ກ່າວເຖິງໃນວັກຍ່ອຍ (ກ) ແລະ (ຂ), ສະພາອາດເຮັດຂໍ້ສະເໜີແນະໃຫ້ແກ່ພາຄີ ຕາມທີ່ເຫັນເໝາະສົມ.

7. ສະມາຊິກຊຶ່ງເປັນພາຄີຂອງສັນຍາທີ່ກ່າວເຖິງໃນວັກ 1 ບໍ່ອາດຮຽກຄ່າທົດແທນ ສໍາລັບຜົນປະໂຫຍດທາງການຄ້າ ຊຶ່ງສະມາຊິກອື່ນໃດອາດໄດ້ຮັບຈາກສັນຍານັ້ນ.

## ມາດຕາ V ເພີ່ມ

ສັນຍາການເຊື່ອມຕົວຂອງຕະຫຼາດແຮງງານ

ສັນຍາສະບັບນີ້ ຈະບໍ່ຫ້າມປະເທດສະມາຊິກໃດ ຈາກການເປັນພາຄີຂອງສັນຍາຈັດຕັ້ງການເຊື່ອມຕົວເຕັມຮູບແບບ[116] ຂອງຕະຫຼາດແຮງງານລະຫວ່າງພາຄີຂອງສັນຍາດັ່ງກ່າວ, ຖ້າຫາກວ່າສັນຍາດັ່ງກ່າວ:

(ກ) ຍົກເວັ້ນພົນລະເມືອງຂອງປະເທດພາຄີໃນສັນຍາ ຈາກຂໍ້ກໍານົດກ່ຽວກັບການມີຖິ່ນຖານ ແລະ ໃບອະນຸຍາດເຮັດວຽກ.

(ຂ) ໄດ້ມີການແຈ້ງການຕໍ່ສະພາການຄ້າດ້ານບໍລິການ.

## ມາດຕາ VI

## ລະບຽບການພາຍໃນປະເທດ

1. ໃນຂະແໜງການທີ່ມີການຮັບຂໍ້ຜູກພັນສະເພາະ, ແຕ່ລະປະເທດສະມາຊິກ ຕ້ອງຮັບປະກັນວ່າ ຈະບໍລິຫານມາດຕະການທັງຫຼາຍທີ່ໃຊ້ໂດຍທົ່ວໄປ ຊຶ່ງມີຜົນກະທົບຕໍ່ການຄ້າດ້ານການບໍລິການ ໃນລັກສະນະທີ່ມີເຫດຜົນ, ມີລັກສະນະພາວະວິໄສ ແລະ ເປັນທໍາ.

2. (ກ) ແຕ່ລະປະເທດສະມາຊິກ ຈະຮັກສາ ຫຼື ຈັດຕັ້ງ ໂດຍໄວທີ່ສຸດເທົ່າທີ່ຈະປະຕິບັດໄດ້ ລະບົບສານຍຸຕິທໍາ ຫຼື ສານໄກ່ເກ່ຍ ຫຼື ສານປົກຄອງ, ຫຼື ບັນດາລະບຽບວິທີປະຕິບັດ ຊຶ່ງເມື່ອໄດ້ຮັບຄໍາຮ້ອງຂໍຈາກຜູ້ໃຫ້ບໍລິການທີ່ໄດ້ຮັບຜົນກະທົບ, ຈະໄດ້ດໍາເນີນການທົບທວນຄືນໂດຍໄວ, ແລະໃຫ້ມີການແກ້ໄຂທີ່ເໝາະສົມ, ເພື່ອໃຫ້ມີການຕັດສິນດ້ານບໍລິຫານທີ່ມີຜົນກະທົບຕໍ່ການຄ້າດ້ານການບໍລິການ ຖ້າວ່າຫາກມີການຢັ້ງຢືນກ່ຽວກັບເຫດການດັ່ງກ່າວ. ໃນກໍລະນີລະບຽບວິທີປະຕິບັດງານນັ້ນ ບໍ່ມີລັກສະນະເປັນເອກະລາດ ຈາກໜ່ວຍງານທີ່ໄດ້ຮັບມອບໝາຍໃຫ້ມີການຕັດສິນດ້ານບໍລິຫານດັ່ງກ່າວ, ປະເທດສະມາຊິກຕ້ອງຮັບປະກັນວ່າ, ລະບຽບວິທີປະຕິບັດດັ່ງກ່າວ ໃນຕົວຈິງໄດ້ສະໜອງການທົບທວນຄືນທີ່ມີລັກສະນະພາວະວິໄສ ແລະ ເປັນທໍາ.

(ຂ) ບົດບັນຍັດຂອງວັກຍ່ອຍ (ກ) ຈະບໍ່ຕີຄວາມໄປໃນທາງທີ່ກໍານົດໃຫ້ປະເທດສະມາຊິກ ຈັດຕັ້ງສານ ຫຼື ລະບຽບວິທີປະຕິບັດດັ່ງກ່າວ ທີ່ບໍ່ສອດຄ່ອງກັບໂຄງສ້າງລັດຖະທໍາມະນູນ ຫຼື ລັກສະນະຂອງລະບົບກົດໝາຍຂອງຕົນ.

3. ໃນກໍລະນີທີ່ຕ້ອງມີການໃຫ້ການອະນຸຍາດສໍາລັບການບໍລິການ ຊຶ່ງໄດ້ມີຂໍ້ຜູກພັນສະເພາະໄວ້, ອົງການທີ່ມີສິດອໍານາດຂອງປະເທດສະມາຊິກ, ຈະແຈ້ງຜົນການຕັດສິນ ກ່ຽວກັບ ການອະນຸຍາດຕໍ່ຜູ້ຍື່ນຄໍາຮ້ອງພາຍໃນໄລຍະເວລາທີ່ເໝາະສົມ ຫຼັງຈາກການຍື່ນຄໍາຮ້ອງດັ່ງກ່າວ ໄດ້ຖືກພິຈາລະນາວ່າ ມີລັກສະນະຄົບຖ້ວນຕາມກົດໝາຍ ແລະ ລະບຽບການພາຍໃນປະເທດແລ້ວ, ຕາມການສະເໜີຂອງຜູ້ຍື່ນຄໍາຮ້ອງ, ອົງການທີ່ມີສິດອໍານາດຂອງປະເທດສະມາຊິກ ຈະແຈ້ງຂໍ້ມູນທີ່ກ່ຽວຂ້ອງກັບສະພາບຂອງຄໍາຮ້ອງແກ່ຜູ້ຍື່ນຄໍາຮ້ອງໂດຍບໍ່ຊັກຊ້າ.

4. ເພື່ອຮັບປະກັນວ່າ ມາດຕະການທີ່ພົວພັນເຖິງເງື່ອນໄຂ ແລະ ຂັ້ນຕອນການດໍາເນີນການ ດ້ານຄຸນລັກສະນະ, ມາດຕະຖານດ້ານເຕັກນິກ ແລະ ເງື່ອນໄຂດ້ານການອອກໃບອະນຸຍາດ ຈະບໍ່ກໍ່ໃຫ້ເກີດ

---

[116] ໂດຍທົ່ວໄປ, ການເຊື່ອມຕົວດັ່ງກ່າວ ກໍານົດໃຫ້ພົນລະເມືອງຂອງຄູ່ສັນຍາທີ່ກ່ຽວຂ້ອງ ມີສິດໃນການເຂົ້າຫາຕະຫຼາດແຮງງານ ຂອງຄູ່ສັນຍາໃດໜຶ່ງໄດ້ຢ່າງເສລີ ແລະ ລວມທັງມາດຕະການທີ່ກ່ຽວຂ້ອງກັບເງື່ອນໄຂໃນການຈ່າຍ, ເງື່ອນໄຂອື່ນໆຂອງການຈ້າງງານ ແລະ ສະຫວັດດີການສັງຄົມ.

ອຸປະສັກທີ່ບໍ່ຈຳເປັນຕໍ່ການຄ້າດ້ານການບໍລິການ, ສະພາການຄ້າດ້ານການບໍລິການຈະກຳນົດກົດລະບຽບທີ່ຈຳເປັນໃດໜຶ່ງຂຶ້ນ ຜ່ານໜ່ວຍງານທີ່ເໝາະສົມ ທີ່ຕົນອາດຈັດຕັ້ງຂຶ້ນ. ກົດລະບຽບດັ່ງກ່າວຈະແນໃສ່ຮັບປະກັນວ່າ ຂໍ້ກຳນົດຕ່າງໆ:

(ກ) ຖືກສ້າງຂຶ້ນບົນພື້ນຖານຂອງເງື່ອນໄຂ ມາດຕະຖານ ຕາມຫຼັກການ ພາວະວິໄສ ແລະ ໂປ່ງໃສ ເຊັ່ນ: ຄວາມຮູ້ ແລະ ຄວາມສາມາດໃນການໃຫ້ບໍລິການ;

(ຂ) ບໍ່ເປັນພາລະເກີນກວ່າທີ່ຈຳເປັນ ໃນການຮັບປະກັນຄຸນນະພາບຂອງການບໍລິການ;

(ຄ) ຕົກຢູ່ໃນກໍລະນີຂອງຂັ້ນຕອນດ້ານການອອກໃບອະນຸຍາດ, ຊຶ່ງໃນຕົວມັນເອງ ຈະບໍ່ເປັນຂໍ້ຈຳກັດໃນການໃຫ້ການບໍລິການ.

5. (ກ) ໃນບັນດາຂະແໜງການທີ່ປະເທດສະມາຊິກ ໄດ້ປະຕິບັດຂໍ້ຜູກພັນສະເພາະ, ໃນລະຫວ່າງການລໍຖ້າໃຫ້ກົດລະບຽບທີ່ໄດ້ກຳນົດຂຶ້ນສຳລັບຂະແໜງການເຫຼົ່ານີ້ ມີຜົນບັງຄັບໃຊ້ ໂດຍອີງຕາມ ມາດຕາ 4, ປະເທດສະມາຊິກຈະບໍ່ໃຊ້ເງື່ອນໄຂການອອກໃບອະນຸຍາດ ແລະ ຄຸນສົມບັດ ແລະ ມາດຕະຖານດ້ານເຕັກນິກ ຊຶ່ງຈະລົບລ້າງ ຫຼືເຮັດໃຫ້ຂໍ້ຜູກພັນສະເພາະ ເສຍຫາຍໄປໃນທາງຊຶ່ງ:

(1) ບໍ່ເປັນໄປຕາມເງື່ອນໄຂ ມາດຕະຖານ ທີ່ລະບຸໄວ້ໃນວັກຍ່ອຍ 4 (ກ), (ຂ) ຫຼື (ຄ); ແລະ

(2) ຄາດບໍ່ເຖິງວ່າ ປະເທດສະມາຊິກຈະໃຊ້ເງື່ອນໄຂດັ່ງກ່າວ ໃນຂະນະທີ່ໄດ້ເຮັດຂໍ້ຜູກພັນສະເພາະໃນຂະແໜງເຫຼົ່ານັ້ນ.

(ຂ) ໃນການພິຈາລະນາກຳນົດວ່າ ປະເທດສະມາຊິກໄດ້ດຳເນີນການ ໂດຍສອດຄ່ອງກັບພັນທະ ພາຍໃຕ້ວັກ 5 (ກ) ຫຼືບໍ່, ຈະຕ້ອງຄຳນຶງເຖິງມາດຕະຖານສາກົນ ຂອງອົງການລະຫວ່າງປະເທດທີ່ກ່ຽວຂ້ອງ[117] ຊຶ່ງປະເທດສະມາຊິກນັ້ນນຳໃຊ້ຢູ່.

6. ໃນຂະແໜງການທີ່ໄດ້ມີການຍອມຮັບ ຂໍ້ຜູກພັນສະເພາະ ກ່ຽວກັບ ການບໍລິການທາງດ້ານວິຊາຊີບ, ແຕ່ລະປະເທດສະມາຊິກ ຈະຈັດໃຫ້ມີວິທີດຳເນີນການທີ່ພຽງພໍ ສຳລັບກວດກາກ່ຽວກັບຄວາມສາມາດ ຂອງຜູ້ປະກອບວິຊາຊີບຂອງປະເທດສະມາຊິກອື່ນໃດໜຶ່ງ.

## ມາດຕາ VII

## ການຮັບຮູ້

1. ເພື່ອຈຸດປະສົງໃນການປະຕິບັດຕາມ ມາດຕະຖານ ຫຼື ເງື່ອນໄຂ ທັງໝົດ ຫຼື ບາງສ່ວນ ໃນການອະນຸມັດ ການອອກໃບອະນຸຍາດ ຫຼື ການຢັ້ງຢືນ ໃຫ້ແກ່ຜູ້ສະໜອງການບໍລິການ, ແລະ ພາຍໃຕ້ຂໍ້ກຳນົດຂອງວັກ 3, ປະເທດສະມາຊິກອາດມີການຮັບຮູ້ ກ່ຽວກັບການສຶກສາ ຫຼື ປະສົບການທີ່ໄດ້ຮັບ, ການດຳເນີນການຕາມເງື່ອນໄຂ, ຫຼື ໃບອະນຸຍາດ ຫຼື ໃບຢັ້ງຢືນ ທີ່ອອກໃຫ້ໂດຍປະເທດໃດໜຶ່ງ. ການຮັບຮູ້

---

[117] ຄຳສັບ " ອົງການລະຫວ່າງປະເທດທີ່ກ່ຽວຂ້ອງ " ໝາຍເຖິງອົງການລະຫວ່າງປະເທດ ຊຶ່ງເປີດກວ້າງໃຫ້ອົງການທີ່ກ່ຽວຂ້ອງຂອງຢ່າງໜ້ອຍທີ່ສຸດ ຈາກທຸກປະເທດສະມາຊິກອົງການການຄ້າໂລກ ໄດ້ເຂົ້າເປັນສະມາຊິກ.

ດັ່ງກ່າວ, ຊຶ່ງອາດຈະຖືກບັນລຸ ໂດຍວິທີການທີ່ເຮັດໃຫ້ສອດຄ່ອງກັນ ຫຼື ຢ່າງອື່ນ ອາດຢູ່ບົນພື້ນຖານຂອງສັນຍາ ຫຼື ຂໍ້ຕົກລົງກັບປະເທດທີ່ກ່ຽວຂ້ອງ ຫຼື ອາດເປັນການຮັບຮູ້ແບບອັດຕະໂນມັດ.

2. ປະເທດສະມາຊິກຊຶ່ງເປັນພາຄີສັນຍາ ຫຼື ຂໍ້ຕົກລົງປະເພດທີ່ກ່າວເຖິງໃນວັກ 1, ບໍ່ວ່າ ຈະມີຢູ່ໃນປັດຈຸບັນ ຫຼື ໃນອານາຄົດ, ຈະຕ້ອງໃຫ້ໂອກາດທີ່ພຽງພໍແກ່ປະເທດສະມາຊິກອື່ນທີ່ມີຜົນປະໂຫຍດທີ່ກ່ຽວຂ້ອງເພື່ອເຈລະຈາຂໍເຂົ້າຮ່ວມໃນສັນຍາ ຫຼື ຂໍ້ຕົກລົງນັ້ນ ຫຼືການເຈລະຈາທີ່ທຽບຖຽງກັນໄດ້.ໃນກໍລະນີທີ່ປະເທດສະມາຊິກໃຫ້ການຮັບຮູ້ໂດຍອັດຕະໂນມັດ, ປະເທດສະມາຊິກນັ້ນ ຈະໃຫ້ໂອກາດທີ່ພຽງພໍແກ່ປະເທດສະມາຊິກອື່ນໃດໜຶ່ງ ເພື່ອສະແດງໃຫ້ເຫັນວ່າການສຶກສາ, ປະສົບການ, ໃບອະນຸຍາດ ຫຼື ໃບຢັ້ງຢືນ ທີ່ໄດ້ຮັບ ຫຼື ການປະຕິບັດຕາມເງື່ອນໄຂ ໃນດິນແດນຂອງປະເທດສະມາຊິກອື່ນນັ້ນ ຄວນໄດ້ຮັບການຮັບຮູ້ (ຍອມຮັບ).

3. ປະເທດສະມາຊິກຈະບໍ່ໃຫ້ການຍອມຮັບ ໃນລັກສະນະທີ່ກໍ່ໃຫ້ເກີດຊ່ອງທາງ ໃນການຈຳແນກລະຫວ່າງປະເທດຕ່າງໆ ໃນການໃຊ້ມາດຕະຖານ ຫຼື ເງື່ອນໄຂ ໃນການອະນຸມັດການອອກໃບອະນຸຍາດ ຫຼືໃບຢັ້ງຢືນຂອງຜູ້ໃຫ້ການບໍລິການ, ຫຼື ຂໍ້ຈຳກັດທີ່ແອບແຝງຕໍ່ການຄ້າດ້ານການບໍລິການ.

4. ແຕ່ລະປະເທດສະມາຊິກຈະ:

(ກ) ແຈ້ງສະພາການຄ້າດ້ານການບໍລິການ ກ່ຽວກັບມາດຕະການໃນການຮັບຮູ້ຂອງຕົນທີ່ມີຢູ່ ແລະ ລະບຸວ່າມາດຕະການດັ່ງກ່າວນັ້ນ ຢູ່ບົນພື້ນຖານຂອງສັນຍາ ຫຼື ຂໍ້ຕົກລົງປະເພດທີ່ກ່າວເຖິງໃນວັກ 1 ຫຼືບໍ່, ພາຍໃນ 12 ເດືອນ ໂດຍເລີ່ມຈາກວັນທີ ທີ່ສັນຍາ WTO ມີຜົນບັງຄັບໃຊ້ຕໍ່ຕົນ;

(ຂ) ແຈ້ງສະພາການຄ້າດ້ານການບໍລິການເປັນການລ່ວງໜ້າ ເທົ່າທີ່ຈະເປັນໄປໄດ້ເຖິງການເປີດເຈລະຈາກ່ຽວກັບສັນຍາ ຫຼື ຂໍ້ຕົກລົງປະເພດທີ່ກ່າວເຖິງໃນວັກ 1 ໂດຍໄວ ເພື່ອທີ່ຈະໄດ້ໃຫ້ໂອກາດທີ່ພຽງພໍແກ່ປະເທດສະມາຊິກອື່ນໃດໜຶ່ງ ເພື່ອສະແດງຄວາມສົນໃຈ ທີ່ຈະເຂົ້າຮ່ວມໃນການເຈລະຈາດັ່ງກ່າວ ກ່ອນທີ່ການເຈລະຈາຈະເຂົ້າສູ່ໄລຍະທີ່ເປັນສາລະສຳຄັນແລ້ວ;

(ຄ) ແຈ້ງສະພາການຄ້າດ້ານການບໍລິການຢ່າງໄວ ເມື່ອຕົນອອກມາດຕະການໃໝ່ກ່ຽວກັບການຮັບຮູ້ ຫຼື ໄດ້ມີການດັດແກ້ຢ່າງຫຼວງຫຼາຍ ຕໍ່ມາດຕະການທີ່ມີຢູ່ແລ້ວ ແລະ ລະບຸວ່າມາດຕະການດັ່ງກ່າວ ຢູ່ບົນພື້ນຖານຂອງສັນຍາ ຫຼື ຂໍ້ຕົກລົງປະເພດທີ່ກ່າວເຖິງໃນວັກ 1 ຫຼືບໍ່.

5. ການຮັບຮູ້ ຄວນຢູ່ບົນພື້ນຖານຂອງເງື່ອນໄຂ ມາດຕະຖານ ທີ່ມີການເຫັນດີຮ່ວມກັນຫຼາຍຝ່າຍ. ໃນກໍລະນີທີ່ເໝາະສົມ, ປະເທດສະມາຊິກຈະເຮັດວຽກ ໂດຍຮ່ວມມືກັບອົງການລະຫວ່າງລັດຖະບານ ແລະ ອົງການທີ່ບໍ່ແມ່ນຂອງລັດຖະບານທີ່ກ່ຽວຂ້ອງເພື່ອການກຳນົດ ແລະ ການຮັບຮອງເອົາມາດຕະຖານ ແລະ ເງື່ອນໄຂສາກົນລວມ ກ່ຽວກັບການຮັບຮູ້ ແລະ ມາດຕະຖານສາກົນລວມສຳລັບການປະກອບການຄ້າດ້ານການບໍລິການ ແລະ ວິຊາຊີບທີ່ກ່ຽວຂ້ອງ.

## ມາດຕາ VIII

## ການຜູກຂາດ ແລະ ຜູ້ໃຫ້ການບໍລິການທີ່ໄດ້ຮັບສິດທິແຕ່ພຽງຜູ້ດຽວ

1. ແຕ່ລະປະເທດສະມາຊິກຈະຮັບປະກັນວ່າ ໃນການໃຫ້ການບໍລິການທີ່ຜູກຂາດໃນຕະຫຼາດທີ່ກ່ຽວຂ້ອງ, ຜູ້ໃຫ້ການບໍລິການ ທີ່ຜູກຂາດການບໍລິການໃດໜຶ່ງ ໃນດິນແດນຂອງຕົນ, ຈະບໍ່ດຳເນີນການໃນ

ລັກສະນະທີ່ບໍ່ສອດຄ່ອງກັບພັນທະຂອງປະເທດສະມາຊິກນັ້ນ ພາຍໃຕ້ມາດຕາ 2 ແລະ ຂໍ້ຜູກພັນສະເພາະຂອງຕົນ.

2. ໃນກໍລະນີທີ່ຜູ້ໃຫ້ການບໍລິການທີ່ຜູກຂາດຂອງປະເທດສະມາຊິກ ແຂ່ງຂັນໃນການໃຫ້ການບໍລິການ, ນອກເໜືອຈາກຂອບເຂດຂອງສິດທິໃນການຜູກຂາດຂອງຕົນ ແລະ ຢູ່ພາຍໃຕ້ຂໍ້ຜູກພັນສະເພາະຂອງປະເທດສະມາຊິກນັ້ນ, ບໍ່ວ່າຈະໂດຍທາງກົງ ຫຼື ຜ່ານບໍລິສັດໃນເຄືອຂ່າຍ, ປະເທດສະມາຊິກນັ້ນ ຈະຕ້ອງຮັບປະກັນວ່າ ຜູ້ໃຫ້ການບໍລິການນັ້ນຈະບໍ່ສວຍໃຊ້ສະຖານະການຜູກຂາດຂອງຕົນໂດຍບໍ່ຖືກຕ້ອງ ເພື່ອດຳເນີນການໃນດິນແດນຂອງຕົນ ໃນລັກສະນະທີ່ບໍ່ສອດຄ່ອງກັບຂໍ້ຜູກພັນນັ້ນ.

3. ຕາມການສະເໜີຈາກປະເທດສະມາຊິກ ຊຶ່ງມີເຫດຜົນພຽງພໍ ທີ່ເຊື່ອໄດ້ວ່າ ຜູ້ໃຫ້ການບໍລິການທີ່ຜູກຂາດການບໍລິການຂອງປະເທດໃດໜຶ່ງ ກຳລັງດຳເນີນການໃນລັກສະນະທີ່ບໍ່ສອດຄ່ອງກັບວັກ 1 ຫຼື 2, ສະພາການຄ້າດ້ານການບໍລິການ ອາດສະເໜີໃຫ້ປະເທດສະມາຊິກກຳນົດ, ຮັກສາໄວ້ ຫຼື ອະນຸມັດຜູ້ໃຫ້ບໍລິການນັ້ນ ສະໜອງຂໍ້ມູນສະເພາະທີ່ພົວພັນເຖິງການດຳເນີນການທີ່ກ່ຽວຂ້ອງດັ່ງກ່າວ.

4. ຫຼັງຈາກວັນທີ ທີ່ສັນຍາ WTO ມີຜົນບັງຄັບໃຊ້, ຫາກປະເທດສະມາຊິກໄດ້ອະນຸຍາດໃຫ້ສິດທິການຜູກຂາດ ກ່ຽວກັບ ການໃຫ້ການບໍລິການຕາມທີ່ລະບຸຢູ່ໃນຂໍ້ຜູກພັນສະເພາະຂອງຕົນ, ປະເທດສະມາຊິກ ນັ້ນຈະແຈ້ງສະພາການຄ້າດ້ານການບໍລິການ ຢ່າງຊ້າ 3 ເດືອນ ກ່ອນທີ່ຈະມີການດຳເນີນອະນຸຍາດໃຫ້ສິດທິການຜູກຂາດຕາມທີ່ຕັ້ງໃຈ ແລະ ມີຜົນບັງຄັບໃຊ້ຂອງບົດບັນຍັດໃນວັກ 2, 3 ແລະ 4 ຂອງມາດຕາ 21.

5. ບົດບັນຍັດຂອງມາດຕານີ້ ຍັງຈະໃຊ້ບັງຄັບກັບກໍລະນີຂອງຜູ້ໃຫ້ການບໍລິການ ທີ່ໄດ້ຮັບສິດທິແຕ່ພຽງຜູ້ດຽວ, ເມື່ອປະເທດສະມາຊິກ (ກ) ອະນຸມັດ ຫຼືກຳນົດໃຫ້ມີຜູ້ໃຫ້ການບໍລິການພຽງແຕ່ຈຳນວນໜ້ອຍ; ແລະ (ຂ) ໂດຍພື້ນຖານ ຫ້າມການແຂ່ງຂັນກັນລະຫວ່າງຜູ້ໃຫ້ການບໍລິການເຫຼົ່ານັ້ນ ໃນດິນແດນຂອງຕົນ; ບໍ່ວ່າຈະເປັນໂດຍທາງການ ຫຼື ຜົນໂດຍທາງປະຕິບັດກໍຕາມ.

**ມາດຕາ IX**

**ການດຳເນີນທຸລະກິດ**

1. ບັນດາປະເທດສະມາຊິກຮັບຮູ້ວ່າ ການດຳເນີນທຸລະກິດບາງຮູບແບບຂອງຜູ້ໃຫ້ການບໍລິການ, ນອກເໜືອຈາກທີ່ຢູ່ພາຍໃຕ້ມາດຕາ 8, ອາດຈຳກັດການແຂ່ງຂັນ ແລະ ດ້ວຍເຫດນັ້ນ ຈຳກັດການຄ້າດ້ານການບໍລິການ.

2. ຕາມການສະເໜີຈາກປະເທດສະມາຊິກອື່ນໃດໜຶ່ງ, ແຕ່ລະປະເທດສະມາຊິກ ຈະເຂົ້າຮ່ວມໃນການປຶກສາຫາລື ເພື່ອຍົກເລີກການປະຕິບັດທີ່ກ່າວເຖິງໃນວັກ 1, ປະເທດສະມາຊິກທີ່ໄດ້ຮັບການສະເໜີ ຈະໃຫ້ການພິຈາລະນາຄຳສະເໜີນັ້ນດ້ວຍຄວາມເຫັນໃຈ ແລະ ຢ່າງເຕັມທີ່ ແລະ ຈະໃຫ້ການຮ່ວມມືໂດຍການສົ່ງຂໍ້ມູນທີ່ບໍ່ເປັນຄວາມລັບທີ່ມີໃຫ້ເປັນການທົ່ວໄປ ກ່ຽວກັບ ເລື່ອງທີ່ເປັນບັນຫານັ້ນ ປະເທດສະມາຊິກທີ່ໄດ້ຮັບຄຳສະເໜີ ຍັງຈະຈັດຫາຂໍ້ມູນອື່ນໆທີ່ມີຢູ່ ໃຫ້ແກ່ປະເທດສະມາຊິກທີ່ເປັນຜູ້ສະເໜີ, ໂດຍອີງຕາມກົດໝາຍພາຍໃນປະເທດ ແລະ ການບັນລຸການຕົກລົງຊຶ່ງເປັນທີ່ພໍໃຈຂອງປະເທດສະມາຊິກທີ່ເປັນຜູ້ສະເໜີ ກ່ຽວກັບການຮັກສາຄວາມລັບຂອງຂໍ້ມູນນັ້ນ.

**ມາດຕາ X**

**ມາດຕະການປົກປ້ອງສຸກເສີນ**

1. ຈະມີການເຈລະຈາຫຼາຍຝ່າຍກ່ຽວກັບບັນຫາຂອງມາດຕະການປົກປ້ອງສຸກເສີນ ບົນພື້ນຖານຂອງຫຼັກການທີ່ບໍ່ມີການຈຳແນກ. ຜົນຂອງການເຈລະຈາດັ່ງກ່າວ ຈະມີຜົນບັງຄັບໃຊ້ໃນວັນທີບໍ່ຊ້າກວ່າ 3 ປີ ໂດຍເລີ່ມຈາກວັນທີ ທີ່ສັນຍາ WTO ມີຜົນບັງຄັບໃຊ້.

2. ໂດຍບໍ່ຄຳນຶງເຖິງບົດບັນຍັດຂອງວັກ 1 ໃນມາດຕາ 21, ໃນໄລະຍະເວລາກ່ອນທີ່ຜົນການເຈລະຈາທີ່ກ່າວເຖິງໃນວັກ 1 ຈະມີຜົນບັງຄັບໃຊ້, ປະເທດສະມາຊິກໃດໜຶ່ງ ອາດຈະແຈ້ງສະພາການຄ້າດ້ານການບໍລິການ ຮັບຮູ້ເຖິງຄວາມຕັ້ງໃຈຂອງຕົນທີ່ຈະດັດແກ້ ຫຼື ຖອນຂໍ້ຜູກພັນສະເພາະ ຫຼັງຈາກໄລຍະເວລາ 1 ປີ ໂດຍເລີ່ມຈາກວັນທີ ທີ່ຂໍ້ຜູກພັນດັ່ງກ່າວມີຜົນບັງຄັບໃຊ້; ຖ້າຫາກວ່າປະເທດສະມາຊິກນັ້ນ ໄດ້ສະແດງເຫດຜົນຕໍ່ສະພາວ່າ ການດັດແກ້ ຫຼື ການຖອນຂໍ້ຜູກພັນດັ່ງກ່າວ ບໍ່ສາມາດລໍຖ້າໄດ້ ຈົນເຖິງໄລຍະເວລາ 3 ປີ ທີ່ກຳນົດໄວ້ໃນວັກ 1 ຂອງມາດຕາ 21.

3. ບົດບັນຍັດຂອງວັກ 2 ຈະບໍ່ນຳມາໃຊ້ ຫຼັງຈາກວັນທີ ທີ່ສັນຍາຂອງ WTO ມີຜົນບັງຄັບໃຊ້ໄປແລ້ວ 3 ປີ.

## ມາດຕາ XI

## ການຊຳລະ ແລະ ການໂອນເງິນ

1. ນອກຈາກສະພາບການທີ່ຄາດການໄວ້ ພາຍໃຕ້ມາດຕາ 12, ປະເທດສະມາຊິກຈະບໍ່ນຳໃຊ້ ຂໍ້ຈຳກັດດ້ານການໂອນເງິນ ແລະ ການຊຳລະເງິນລະຫວ່າງປະເທດ ສຳລັບລາຍການເຄື່ອນໄຫວທຸລະກິດທີ່ພົວພັນເຖິງຂໍ້ຜູກພັນສະເພາະຂອງຕົນ.

2. ບໍ່ມີບົດບັນຍັດໃດໃນສັນຍາສະບັບນີ້ ຈະມີຜົນກະທົບຕໍ່ສິດທິ ແລະ ພັນທະ ຂອງປະເທດສະມາຊິກຂອງກອງທຶນການເງິນລະຫວ່າງປະເທດ ພາຍໃຕ້ກົດລະບຽບຂອງກອງທຶນ, ລວມທັງລາຍການເຄື່ອນໄຫວດ້ານການແລກປ່ຽນເງິນຊຶ່ງສອດຄ່ອງກັບກົດລະບຽບ, ຖ້າຫາກວ່າປະເທດສະມາຊິກຈະບໍ່ນຳໃຊ້ ການຈຳກັດຕໍ່ທຸລະກຳທີ່ພົວພັນເຖິງເງິນທຶນ ທີ່ບໍ່ສອດຄ່ອງກັບຂໍ້ຜູກພັນສະເພາະຂອງຕົນກ່ຽວກັບລາຍການເຄື່ອນໄຫວທຸລະກິດນັ້ນ,ນອກຈາກຈະເປັນໄປຕາມມາດຕາ12 ຫຼືຕາມຄຳສະເໜີຂອງກອງທຶນ.

## ມາດຕາ XII

## ຂໍ້ຈຳກັດເພື່ອປົກປ້ອງ ດຸນຊຳລະສະສາງ

1. ໃນກໍລະນີມີຄວາມຫຍຸ້ງຍາກ ຫຼື ໄພຂົ່ມຂູ່ ຕໍ່ດຸນການຊຳລະສະສາງ ແລະ ບັນຫາຫຍຸ້ງຍາກທາງດ້ານການເງິນພາຍນອກທີ່ຮ້າຍແຮງ, ປະເທດສະມາຊິກອາດຮັບຮອງ ຫຼື ຮັກສາໄວ້ ຂໍ້ຈຳກັດຕໍ່ການຄ້າດ້ານການບໍລິການ ຊຶ່ງຕົນໄດ້ປະຕິບັດຂໍ້ຜູກພັນສະເພາະໄວ້, ລວມທັງ ການຊຳລະ ຫຼື ການໂອນເງິນສຳລັບລາຍການເຄື່ອນໄຫວທຸລະກິດ ຊຶ່ງກ່ຽວຂ້ອງກັບຂໍ້ຜູກພັນສະເພາະນັ້ນ. ເປັນທີ່ຮັບຮູ້ກັນວ່າ ຄວາມກົດດັນສະເພາະທີ່ມີຕໍ່ ດຸນການຊຳລະສະສາງ ຂອງປະເທດສະມາຊິກໃນຂະບວນການວິວັດແຫ່ງການພັດທະນາເສດຖະກິດ ຫຼື ໃນໄລຍະຂ້າມຜ່ານທາງດ້ານເສດຖະກິດ ອາດກໍ່ໃຫ້ເກີດຄວາມຈຳເປັນທີ່ຈະຕ້ອງໃຊ້ຂໍ້ຈຳກັດເພື່ອຮັບປະກັນການຮັກສາໄວ້ ລະດັບເງິນສຳຮອງທີ່ພຽງພໍ ເພື່ອການຈັດຕັ້ງປະຕິບັດຕາມແຜນການພັດທະນາເສດຖະກິດ ຫຼື ການຂ້າມຜ່ານທາງເສດຖະກິດຂອງຕົນ ເປັນຕົ້ນ.

2. ຂໍ້ຈຳກັດທີ່ກ່າວເຖິງໃນວັກ 1:

(ກ) ຈະຕ້ອງບໍ່ມີການຈຳແນກລະຫວ່າງປະເທດສະມາຊິກດ້ວຍກັນ;

(ຂ) ຈະຕ້ອງສອດຄ່ອງກັບກົດລະບຽບຂອງກອງທຶນການເງິນລະຫວ່າງປະເທດ;

(ຄ) ຈະຕ້ອງຫຼີກລ້ຽງຄວາມເສຍຫາຍທີ່ບໍ່ຈຳເປັນທີ່ມີຜົນປະໂຫຍດທາງດ້ານການຄ້າ, ເສດຖະກິດ ແລະການເງິນ ຂອງປະເທດສະມາຊິກອື່ນໃດໜຶ່ງ;

(ງ) ຈະບໍ່ໃຊ້ເກີນກວ່າຄວາມຈຳເປັນ ເພື່ອແກ້ໄຂສະຖານະການ ທີ່ໄດ້ບັນຍາຍໄວ້ໃນວັກ 1;

(ຈ) ຈະໃຊ້ເປັນການຊົ່ວຄາວ ແລະ ຄ່ອຍໆຍົກເລີກແບບກ້າວໜ້າເປັນລຳດັບ ເມື່ອສະຖານະການທີ່ລະບຸໄວ້ໃນວັກ 1 ດີຂຶ້ນ.

3. ໃນການກຳນົດຂອບເຂດຜົນກະທົບຂອງການນຳໃຊ້ຂໍ້ຈຳກັດດັ່ງກ່າວນັ້ນ, ປະເທດສະມາຊິກອາດໃຫ້ບຸລິມະສິດຕໍ່ການໃຫ້ການບໍລິການ ຊຶ່ງມີຄວາມຈຳເປັນຫຼາຍກວ່າຕໍ່ໂຄງການດ້ານເສດຖະກິດ ຫຼື ໂຄງການພັດທະນາຂອງຕົນ. ແນວໃດກໍຕາມ, ຂໍ້ຈຳກັດດັ່ງກ່າວຈະບໍ່ຖືກຮັບຮອງ ຫຼື ຮັກສາໄວ້ເພື່ອຈຸດປະສົງ ໃນການປົກປ້ອງຂະແໜງບໍລິການສະເພາະໃດໜຶ່ງ.

4. ຂໍ້ຈຳກັດໃດທີ່ຖືກຮັບຮອງ ຫຼື ຮັກສາໄວ້ພາຍໃຕ້ວັກ 1, ຫຼືການປ່ຽນແປງຂໍ້ຈຳກັດນັ້ນ, ຈະຕ້ອງຖືກແຈ້ງໃຫ້ສະພາບໍລິຫານທົ່ວໄປຮູ້ໂດຍໄວ.

5. (ກ) ປະເທດສະມາຊິກທີ່ໃຊ້ບົດບັນຍັດຂອງມາດຕານີ້ ຈະຕ້ອງປຶກສາຫາລືກ່ຽວກັບຂໍ້ຈຳກັດທີ່ຖືກຮັບຮອງພາຍໃຕ້ມາດຕານີ້ ກັບຄະນະກຳມະການວ່າດ້ວຍຂໍ້ຈຳກັດ ດຸນການຊຳລະສະສາງ ໂດຍໄວ.

(ຂ) ກອງປະຊຸມລະດັບລັດຖະມົນຕີ ຈະກຳນົດຂັ້ນຕອນການດຳເນີນການ[118] ສຳລັບການປຶກສາຫາລືເປັນໄລຍະ ໆ ໂດຍມີວັດຖຸປະສົງເພື່ອໃຫ້ສາມາດປະກອບຄຳເຫັນດັ່ງກ່າວນັ້ນ ຕໍ່ປະເທດສະມາຊິກທີ່ກ່ຽວຂ້ອງ ຕາມທີ່ຕົນພິຈາລະນາວ່າເໝາະສົມ.

(ຄ) ການປຶກສາຫາລືດັ່ງກ່າວນັ້ນ ຈະປະເມີນສະຖານະຂອງດຸນການຊຳລະສະສາງຂອງປະເທດສະມາຊິກທີ່ກ່ຽວຂ້ອງ ແລະ ຂໍ້ຈຳກັດທີ່ຖືກຮັບຮອງ ຫຼື ຮັກສາໄວ້ ພາຍໃຕ້ມາດຕານີ້ ໂດຍຄຳນຶງເຖິງປັດໄຈຕ່າງໆ ເຊັ່ນ:

(1) ລັກສະນະ ແລະ ຂອບເຂດຂອງບັນຊີດຸນການຊຳລະສະສາງ ແລະ ຄວາມຫຍຸ້ງຍາກດ້ານເງິນຕາຕ່າງປະເທດ;

(2) ສະພາບແວດລ້ອມທາງດ້ານທຸລະກິດ ແລະ ເສດຖະກິດຕ່າງປະເທດຂອງປະເທດສະມາຊິກທີ່ຂໍປຶກສາຫາລື;

(3) ທາງເລືອກກ່ຽວກັບມາດຕະການແກ້ໄຂທີ່ອາດມີຢູ່.

(ງ) ການປຶກສາຫາລືຈະພິຈາລະນາເຖິງຄວາມສອດຄ່ອງຂອງຂໍ້ຈຳກັດຕ່າງໆ ກັບບົດບັດຍັດໃນວັກ 2 (ຈ).

(ຈ) ໃນການປຶກສາຫາລືດັ່ງກ່າວນັ້ນ, ຜົນການກວດສອບທັງໝົດກ່ຽວກັບສະຖິຕິ ແລະ ຄວາມເປັນຈິງອື່ນ ຊຶ່ງສະເໜີໂດຍກອງທຶນລະຫວ່າງປະເທດ ທີ່ພົວພັນເຖິງການແລກປ່ຽນເງິນ

---

[118] ເປັນທີ່ເຂົ້າໃຈກັນວ່າ ຂັ້ນຕອນດຳເນີນການຕາມວັກ 5 ຈະເປັນເຊັ່ນດຽວກັບຂັ້ນຕອນດຳເນີນການຂອງ GATT 1994.

ຕາຕ່າງປະເທດ, ເງິນທຶນສຳຮອງ ແລະ ດຸນການຊຳລະສະສາງ, ຈະຕ້ອງໄດ້ຖືກຮັບຮອງ ແລະ ຜົນສະຫຼຸບຈະຢູ່ບົນພື້ນຖານຂອງການປະເມີນຂອງກອງທຶນ ກ່ຽວກັບ ດຸນການຊຳລະສະສາງ ແລະ ຖານະທາງດ້ານການເງິນພາຍນອກຂອງປະເທດສະມາຊິກທີ່ຂໍການປຶກສາຫາລື.

7. ຖ້າປະເທດສະມາຊິກຊຶ່ງບໍ່ໄດ້ເປັນສະມາຊິກຂອງກອງທຶນການເງິນລະຫວ່າງປະເທດ ມີຄວາມປະສົງທີ່ຈະນຳໃຊ້ບົດບັນຍັດຂອງມາດຕານີ້, ກອງປະຊຸມລະດັບລັດຖະມົນຕີຈະກຳນົດຂັ້ນຕອນດຳເນີນການທົບທວນ ແລະ ຂັ້ນຕອນດຳເນີນການອື່ນໆ ທີ່ຈຳເປັນຂຶ້ນ.

### ມາດຕາ XIII

### ການຈັດຊື້ໂດຍລັດຖະບານ

1. ມາດຕາ 2, 16 ແລະ 17 ຈະບໍ່ນຳມາໃຊ້ກັບກົດໝາຍ, ລະບຽບການ ຫຼື ຂໍ້ກຳນົດ ທີ່ໃຊ້ບັງຄັບກັບການຈັດຊື້ການບໍລິການໂດຍໜ່ວຍງານຂອງລັດຖະບານ ເພື່ອຜົນປະໂຫຍດຂອງລັດຖະບານ ແລະ ບໍ່ແມ່ນເພື່ອມາຂາຍຕໍ່ໃນທາງດ້ານການຄ້າ ຫຼື ນຳໃຊ້ການບໍລິການເພື່ອການຂາຍໃນທາງທຸລະກິດ.

2. ຈະມີການເຈລະຈາຫຼາຍຝ່າຍວ່າດ້ວຍການຈັດຊື້ການບໍລິການໂດຍລັດຖະບານພາຍໃຕ້ສັນຍາສະບັບນີ້ ພາຍໃນ 2 ປີ ໂດຍເລີ່ມຈາກວັນທີ ທີ່ສັນຍາ WTO ມີຜົນບັງຄັບໃຊ້.

### ມາດຕາ XIV

### ຂໍ້ຍົກເວັ້ນທົ່ວໄປ

ພາຍໃຕ້ຄວາມຮຽກຮ້ອງຕ້ອງການ ທີ່ຈະບໍ່ໃຫ້ມາດຕະການເຫຼົ່ານີ້ ຖືກນຳມາໃຊ້ໃນລັກສະນະທີ່ຈະກໍ່ໃຫ້ເກີດຊ່ອງທາງໃນການຈຳແນກ ໂດຍລຳພັງໃຈ ຫຼື ບໍ່ມີເຫດຜົນຢັ້ງຢືນ ລະຫວ່າງປະເທດຕ່າງໆ ໃນກໍລະນີທີ່ມີເງື່ອນໄຂທີ່ຄ້າຍຄືກັນ, ຫຼືກໍ່ໃຫ້ເກີດມີການກີດກັ້ນຕໍ່ການທຸລະກິດດ້ານການບໍລິການ, ບໍ່ມີບົດບັນຍັດໃດໃນສັນຍານີ້ ທີ່ຈະຖືກຕີຄວາມໝາຍໄປໃນທາງທີ່ຫ້າມປະເທດສະມາຊິກໃດຮັບຮອງ ຫຼື ບັງຄັບໃຊ້ມາດຕະການທີ່:

(ກ) ຈຳເປັນເພື່ອປົກປ້ອງສິນລະທຳຂອງປະຊາຊົນ ຫຼື ຮັກສາຄວາມສະຫງົບຮຽບຮ້ອຍຂອງສາທາລະນະ[119];

(ຂ) ຈຳເປັນເພື່ອປົກປ້ອງຊີວິດ ຫຼື ສຸຂະພາບຂອງມະນຸດ, ສັດ ຫຼື ພືດ;

(ຄ) ຈຳເປັນເພື່ອຮັບປະກັນຄວາມສອດຄ່ອງຕາມກົດໝາຍ ຫຼື ລະບຽບການ ຊຶ່ງບໍ່ສອດຄ່ອງກັບບົດບັນຍັດຂອງສັນຍາສະບັບນີ້ ລວມທັງສິ່ງທີ່ກ່ຽວຂ້ອງກັບ:

(1) ການປ້ອງກັນການປະຕິບັດທີ່ຫຼອກລວງ ແລະ ສໍ້ໂກງ ຫຼືເພື່ອຈັດການກັບຜົນກະທົບຂອງການຜິດຕໍ່ສັນຍາດ້ານການບໍລິການ;

(2) ການປົກປ້ອງສິດທິຄວາມເປັນຢູ່ສ່ວນຕົວ ທີ່ກ່ຽວພັນກັບການປະມວນ ແລະ ການເຜີຍແຜ່ຂໍ້ມູນສ່ວນບຸກຄົນ ແລະ ການຮັກສາຄວາມລັບຂອງປະຫວັດ ຫຼື ບັນຊີສ່ວນບຸກຄົນ;

---

[119] ຂໍ້ຍົກເວັ້ນກ່ຽວກັບຄວາມສະຫງົບຮຽບຮ້ອຍຂອງສາທາລະນະ ອາດຈະຍົກຂຶ້ນໄດ້ ສະເພາະໃນກໍລະນີທີ່ມີການຄຸກຄາມທີ່ຮຸນແຮງ ແລະ ແທ້ຈິງ ເກີດຂຶ້ນແກ່ຜົນປະໂຫຍດພື້ນຖານຢ່າງໃດຢ່າງໜຶ່ງຂອງສັງຄົມ.

(3) ຄວາມປອດໄພ;

(ງ) ບໍ່ສອດຄ່ອງກັບມາດຕາ 17, ຫາກຄວາມແຕກຕ່າງໃນການປະຕິບັດ ແນໃສ່ຮັບປະກັນການກຳນົດ ຫຼື ການເກັບອາກອນທາງກົງ ທີ່ກ່ຽວຂ້ອງກັບການບໍລິການ ຫຼື ຜູ້ໃຫ້ການບໍລິການຂອງປະເທດສະມາຊິກອື່ນ ຢ່າງເປັນທຳ ຫຼື ມີປະສິດທິພາບ[120];

(ຈ) ບໍ່ສອດຄ່ອງກັບ ມາດຕາ 2, ຖ້າຫາກຄວາມແຕກຕ່າງໃນການປະຕິບັດເປັນຜົນອັນເນື່ອງມາຈາກສັນຍາກ່ຽວກັບ ການຫຼີກລ້ຽງການເກັບພາສີຊ້ຳຊ້ອນ ຫຼື ບົດບັນຍັດກ່ຽວກັບການຫຼີກລ້ຽງການເກັບພາສີຊ້ຳຊ້ອນໃນສັນຍາ ຫຼື ຂໍ້ຕົກລົງລະຫວ່າງປະເທດອື່ນໃດໜຶ່ງຊຶ່ງປະເທດສະມາຊິກມີການຜູກພັນຢູ່.

**ມາດຕາ XIV ເພີ່ມ**

**ຂໍ້ຍົກເວັ້ນທາງດ້ານຄວາມໝັ້ນຄົງ**

1. ບໍ່ມີບົດບັນຍັດໃດໃນສັນຍານີ້ ຈະໄດ້ຮັບການຕີຄວາມໝາຍ:

(ກ) ໃຫ້ປະເທດສະມາຊິກໃດໜຶ່ງ ສົ່ງຂໍ້ມູນໃດໆ, ທີ່ປະເທດສະມາຊິກນັ້ນພິຈາລະນາເຫັນວ່າ ຈະຂັດກັບຜົນປະໂຫຍດທີ່ສຳຄັນທາງດ້ານຄວາມໝັ້ນຄົງຂອງຕົນ; ຫຼື

(ຂ) ເພື່ອຫ້າມປະເທດສະມາຊິກໃດໜຶ່ງ ຈາກການກະທຳທີ່ປະເທດສະມາຊິກນັ້ນພິຈາລະນາ ເຫັນວ່າມີຄວາມຈຳເປັນ ເພື່ອປົກປ້ອງຜົນປະໂຫຍດທີ່ສຳຄັນທາງດ້ານຄວາມໝັ້ນຄົງຂອງຕົນ:

(1) ທີ່ກ່ຽວຂ້ອງກັບການໃຫ້ບໍລິການໂດຍທາງກົງຫຼື ທາງອ້ອມເພື່ອຈຸດປະສົງໃນການສົ່ງສະບຽງອາຫານແກ່ອົງການຈັດຕັ້ງຂອງທະຫານ;

(2) ທີ່ກ່ຽວຂ້ອງກັບວັດຖຸລະເບີດ ແລະ ວັດສະດຸລະເບີດ ຫຼື ວັດຖຸອື່ນໆ ທີ່ຜະລິດຈາກວັດຖຸນັ້ນ;

(3) ຊຶ່ງດຳເນີນການໃນຍາມສົງຄາມ ຫຼື ພາວະສຸກເສີນອື່ນ ໃນຄວາມສຳພັນລະຫວ່າງປະເທດ; ຫຼື

(ຄ) ເພື່ອຫ້າມປະເທດສະມາຊິກໃດໜຶ່ງຈາກການດຳເນີນການໃດໆທີ່ເປັນໄປຕາມພັນທະພາຍໃຕ້ກົດບັດສະຫະປະຊາຊາດ ເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງປະເທດ.

---

[120] ມາດຕະການທີ່ແນໃສ່ຮັບປະກັນການກຳນົດ ຫຼື ເກັບອາກອນທາງກົງ ທີ່ເປັນທຳ ຫຼື ມີປະສິດທິພາບ ລວມທັງມາດຕະການທີ່ປະເທດສະມາຊິກດຳເນີນການຕາມລະບົບພາສີຂອງຕົນ ຊຶ່ງ:

(1) ປະຕິບັດຕໍ່ຜູ້ໃຫ້ການບໍລິການຊຶ່ງເປັນຜູ້ທີ່ບໍ່ມີຖິ່ນທີ່ຢູ່ຖາວອນ ໂດຍຮັບຮູ້ຄວາມເປັນຈິງທີ່ວ່າພັນທະທາງດ້ານພາສີຂອງຜູ້ທີ່ບໍ່ມີຖິ່ນທີ່ຢູ່ຖາວອນນັ້ນ ຈະກຳນົດຈາກລາຍການທີ່ສາມາດເກັບພາສີໄດ້ໂດຍມີແຫຼ່ງ ຫຼືເກີດຂຶ້ນໃນດິນແດນຂອງປະເທດສະມາຊິກ; ຫຼື

(2) ປະຕິບັດຕໍ່ຜູ້ທີ່ບໍ່ມີຖິ່ນທີ່ຢູ່ຖາວອນ ເພື່ອຮັບປະກັນການກຳນົດ ຫຼື ເກັບພາສີໃນດິນແດນຂອງປະເທດສະມາຊິກ; ຫຼື

2. ຈະຕ້ອງແຈ້ງໃຫ້ສະພາການຄ້າດ້ານການບໍລິການ ຮູ້ເຖິງມາດຕະການທີ່ໃຊ້ພາຍໃຕ້ວັກ 1 (ຂ) ແລະ (ຄ) ແລະ ການເລີກໃຊ້ມາດຕະການເຫຼົ່ານັ້ນ ຢ່າງຄົບຖ້ວນທີ່ສຸດ ເທົ່າທີ່ເປັນໄປໄດ້.

### ມາດຕາ XV

### ການຖົມຊຸມ

1. ປະເທດສະມາຊິກຮັບຮູ້ວ່າ, ໃນສະພາບການອັນແນ່ນອນ, ການຖົມຊຸມອາດຈະມີຜົນບິດເບືອນຕໍ່ການຄ້າດ້ານການບໍລິການ. ປະເທດສະມາຊິກຈະເຈລະຈານຳກັນ ເພື່ອພັດທະນາລະບຽບວິໄນພະຫຸພາຄີທີ່ຈຳເປັນ ເພື່ອຫຼີກລ້ຽງຜົນກະທົບທີ່ມີລັກສະນະບິດເບືອນ ຕໍ່ການຄ້າດັ່ງກ່າວ[121]. ການເຈລະຈາ ຍັງຈະພິຈາລະນາເຖິງຄວາມເໝາະສົມຂອງວິທີການດຳເນີນການຕອບໂຕ້. ການເຈລະຈາດັ່ງກ່າວນັ້ນ ຈະຕ້ອງຮັບຮູ້ເຖິງບົດບາດຂອງການຖົມຊຸມທີ່ກ່ຽວພັນກັບແຜນການພັດທະນາຂອງປະເທດກຳລັງພັດທະນາ ແລະ ຄຳນຶງເຖິງຄວາມຈຳເປັນຂອງປະເທດສະມາຊິກ,ໂດຍສະເພາະ ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ, ເພື່ອໃຫ້ມີການໂຍະຍານໃນເລື່ອງນີ້. ເພື່ອຈຸດປະສົງຂອງການເຈລະຈາດັ່ງກ່າວນັ້ນ, ປະເທດສະມາຊິກຈະແລກປ່ຽນຂໍ້ມູນກ່ຽວກັບການຖົມຊຸມທັງປວງທີ່ພົວພັນເຖິງການຄ້າດ້ານການບໍລິການ ຊຶ່ງປະເທດສະມາຊິກເຫຼົ່ານັ້ນໄດ້ໃຫ້ແກ່ຜູ້ໃຫ້ບໍລິການພາຍໃນປະເທດຂອງຕົນ.

2. ຫາກປະເທດສະມາຊິກໃດໜຶ່ງພິຈາລະນາເຫັນວ່າ ຕົນໄດ້ຮັບຜົນກະທົບຢ່າງຮຸນແຮງຈາກການໃຫ້ການຖົມຊຸມຂອງປະເທດສະມາຊິກອື່ນ ປະເທດສະມາຊິກນັ້ນອາດສະເໜີຂໍການປຶກສາຫາລື ກັບປະເທດສະມາຊິກທີ່ກ່ຽວຂ້ອງ ກ່ຽວກັບເລື່ອງດັ່ງກ່າວ. ຄຳສະເໜີນັ້ນຈະໄດ້ຮັບການພິຈາລະນາດ້ວຍຄວາມເຫັນອົກເຫັນໃຈ.

## ພາກທີ III

## ຂໍ້ຜູກພັນສະເພາະ

### ມາດຕາ XVI

### ການເຂົ້າສູ່ຕະຫຼາດ

1. ການເຂົ້າສູ່ຕະຫຼາດ ຜ່ານຮູບແບບການໃຫ້ການບໍລິການ ດັ່ງທີ່ລະບຸໄວ້ໃນມາດຕາ I, ແຕ່ລະປະເທດສະມາຊິກ ຈະໃຫ້ການປະຕິບັດຕໍ່ການບໍລິການ ແລະ ຜູ້ໃຫ້ບໍລິການ ຂອງປະເທດສະມາຊິກອື່ນໃດໜຶ່ງ ໃນວິທີທາງທີ່ເປັນການອະນຸເຄາະ ທີ່ບໍ່ດ້ອຍໄປກວ່າທີ່ໄດ້ສະເໜີໄວ້ພາຍໃຕ້ຂໍ້ກຳນົດ, ຂໍ້ຈຳກັດ ແລະ ເງື່ອນໄຂທີ່ຕົກລົງ ແລະ ລະບຸໄວ້ໃນຕາຕະລາງຂອງຕົນ[122].

---

[121] ແຜນການດຳເນີນງານໃນອານາຄົດ ຈະກຳນົດວ່າ ການເຈລະຈາກ່ຽວກັບລະບຽບວິໄນພະຫຸພາຄີ ດັ່ງກ່າວ ຈະດຳເນີນໄປຄືແນວໃດ ແລະ ໃນຊ່ວງເວລາໃດ.

[122] ຖ້າປະເທດສະມາຊິກປະຕິບັດຂໍ້ຜູກພັນການເປີດຕະຫຼາດທີ່ກ່ຽວຂ້ອງກັບການໃຫ້ບໍລິການຜ່ານຮູບແບບຂອງການສະໜອງ ຕາມທີ່ກ່າວເຖິງໃນວັກ 2(ກ) ຂອງມາດຕາ I ແລະ ຖ້າການເຄື່ອນຍ້າຍທຶນຂ້າມພົມແດນເປັນພາກສ່ວນຈຳເປັນຂອງການບໍລິການ, ປະເທດສະມາຊິກນັ້ນ ຈະມີຂໍ້ຜູກພັນຕາມນັ້ນ ໃນການອະນຸຍາດການເຄື່ອນໄຫວທຶນດັ່ງກ່າວ. ຖ້າປະເທດສະມາຊິກ ປະຕິບັດຂໍ້ຜູກພັນການເປີດຕະຫຼາດທີ່ກ່ຽວຂ້ອງກັບການໃຫ້ການບໍລິການຜ່ານຮູບແບບ

2. ໃນຂະແໜງການທີ່ມີການປະຕິບັດຂໍ້ຜູກພັນ ກ່ຽວກັບການເຂົ້າສູ່ຕະຫຼາດ, ມາດຕະການຊຶ່ງປະເທດສະມາຊິກຈະບໍ່ຮັກສາ ຫຼື ຮັບຮອງມາດຕະການຕ່າງໆ ບໍ່ວ່າຈະເປັນໄປຕາມການແບ່ງພາກ ຫຼື ຕາມອານາເຂດທັງໝົດ, ນອກຈາກໄດ້ລະບຸໄວ້ເປັນຢ່າງອື່ນ ໃນຕາຕະລາງຂອງຕົນ, ຊຶ່ງໝາຍເຖິງ:

(ກ) ການຈຳກັດຈຳນວນຜູ້ໃຫ້ການບໍລິການບໍ່ວ່າຈະຢູ່ໃນຮູບແບບຂອງຈຳນວນ ຕົວເລກໂຄຕ້າ, ການຜູກຂາດ, ຜູ້ໃຫ້ການບໍລິການທີ່ໄດ້ຮັບສິດແຕ່ພຽງຜູ້ດຽວ ຫຼື ເງື່ອນໄຂກ່ຽວກັບການທົດສອບຄວາມຈຳເປັນທາງດ້ານເສດຖະກິດ;

(ຂ) ການຈຳກັດມູນຄ່າລວມທັງໝົດ ຂອງລາຍການທຸລະກຳການບໍລິການ ຫຼື ຊັບສິນໃນຮູບແບບຂອງຈຳນວນໂຄຕ້າ ຫຼື ເງື່ອນໄຂກ່ຽວກັບການທົດສອບຄວາມຈຳເປັນທາງດ້ານເສດຖະກິດ;

(ຄ) ການຈຳກັດໃນຈຳນວນທັງໝົດຂອງການປະກອບການບໍລິການ ຫຼື ໃນປະລິມານທັງໝົດຂອງຜົນໄດ້ຈາກການບໍລິການ ທີ່ສະແດງອອກເປັນຫົວໜ່ວຍຕົວເລກ ທີ່ໄດ້ຮັບການກຳນົດໃນຮູບແບບຂອງໂຄຕ້າ ຫຼື ເງື່ອນໄຂກ່ຽວກັບການທົດສອບຄວາມຈຳເປັນທາງດ້ານເສດຖະ ກິດ[123];

(ງ) ການຈຳກັດຈຳນວນທັງໝົດ ຂອງບຸກຄົນທຳມະດາ ທີ່ອາດຖືກຈ້າງໃນຂະແໜງບໍລິການໃດໜຶ່ງໂດຍສະເພາະ ຫຼືຖືກວ່າຈ້າງໂດຍຜູ້ໃຫ້ການບໍລິການ ແລະ ຊຶ່ງເປັນຜູ້ທີ່ຈຳເປັນ, ແລະກ່ຽວຂ້ອງໂດຍກົງຕໍ່ການໃຫ້ບໍລິການສະເພາະໃດໜຶ່ງ ໃນຮູບແບບຂອງຈຳນວນຕົວເລກໂຄຕ້າ ຫຼືເງື່ອນໄຂກ່ຽວກັບການທົດສອບຄວາມຈຳເປັນທາງດ້ານເສດຖະກິດ;

(ຈ) ມາດຕະການຊຶ່ງຈຳກັດ ຫຼື ກຳນົດປະເພດສະເພາະຂອງອົງກອນທາງກົດໝາຍ ຫຼື ການຮ່ວມລົງທຶນ ຊຶ່ງຜູ້ໃຫ້ການບໍລິການອາດມີການໃຫ້ການບໍລິການນັ້ນ; ແລະ

(ສ) ການຈຳກັດໃນການເຂົ້າຮ່ວມດ້ານທຶນຂອງຕ່າງປະເທດ ໃນຮູບແບບຂອງການຈຳກັດອັດຕາສ່ວນສູງສຸດຂອງການຖືຫຸ້ນຕ່າງດ້າວ ຫຼື ມູນຄ່າລວມທັງໝົດ ຂອງການລົງທຶນຈາກຕ່າງປະເທດ ຂອງແຕ່ລະບຸກຄົນ ຫຼື ໂດຍການຮ່ວມທຶນ.

**ມາດຕາ XVII**

**ການປະຕິບັດແບບພາຍໃນຊາດ**

1. ໃນຂະແໜງການທີ່ລະບຸໄວ້ໃນຕາຕະລາງຂອງຕົນ, ແລະ ພາຍໃຕ້ເງື່ອນໄຂ ແລະ ຂໍ້ຈຳກັດຕ່າງໆ ທີ່ກຳນົດໄວ້ໃນນັ້ນ, ກ່ຽວກັບມາດຕະການທັງປວງ ທີ່ມີຜົນກະທົບຕໍ່ການໃຫ້ການບໍລິການ, ແຕ່ລະປະເທດສະມາຊິກ ຈະໃຫ້ການປະຕິບັດຕໍ່ການບໍລິການ ແລະ ຜູ້ໃຫ້ການບໍລິການຂອງປະເທດສະມາຊິກ

---

ຂອງການສະໜອງທີ່ໄດ້ກ່າວເຖິງໃນວັກ 2(ຄ) ຂອງມາດຕາ 1, ປະເທດສະມາຊິກນັ້ນ ຈະມີຂໍ້ຜູກພັນຕາມນັ້ນ ໃນການອະນຸຍາດການເຄື່ອນຍ້າຍທຶນທີ່ກ່ຽວຂ້ອງ ເຂົ້າມາໃນດິນແດນຂອງຕົນ.

[123] ວັກຍ່ອຍ2(ຄ) ບໍ່ໄດ້ລວມມາດຕະການຂອງປະເທດສະມາຊິກ ຊຶ່ງຈຳກັດປັດໄຈທີ່ໃຊ້ສຳລັບການໃຫ້ການບໍລິການ

ອື່ນໃດໜຶ່ງ ທີ່ເປັນການອະນຸເຄາະ ບໍ່ດ້ອຍໄປກວ່າການປະຕິບັດ ທີ່ປະເທດສະມາຊິກນັ້ນໄດ້ໃຫ້ແກ່ການບໍລິການ ແລະ ຜູ້ໃຫ້ການບໍລິການ ທີ່ຄ້າຍຄືກັນໃນປະເທດຂອງຕົນ[124].

2. ປະເທດສະມາຊິກອາດປະຕິບັດຕາມເງື່ອນໄຂໃນວັກ 1 ໂດຍການໃຫ້ການປະຕິບັດເຊັ່ນດຽວກັນ ຫຼື ແຕກຕ່າງກັນຢ່າງເປັນທາງການ ແກ່ການບໍລິການ ແລະ ຜູ້ໃຫ້ການບໍລິການທີ່ຄ້າຍຄືກັນໃນປະເທດຂອງຕົນ.

3. ການປະຕິບັດເຊັ່ນດຽວກັນ ຫຼື ແຕກຕ່າງກັນຢ່າງເປັນທາງການ ຈະຖືວ່າເປັນການປະຕິບັດທີ່ດ້ອຍກວ່າ ຖ້າການປະຕິບັດນັ້ນ ມີການດັດແກ້ເງື່ອນໄຂການແຂ່ງຂັນໃຫ້ເປັນປະໂຫຍດຕໍ່ການບໍລິການ ຫຼື ຜູ້ໃຫ້ການບໍລິການຂອງປະເທດສະມາຊິກ ເມື່ອປຽບທຽບກັບການບໍລິການ ຫຼື ຜູ້ໃຫ້ການບໍລິການທີ່ຄ້າຍຄືກັນຂອງອີກປະເທດສະມາຊິກອື່ນໃດໜຶ່ງ.

### ມາດຕາ XVIII

### ຂໍ້ຜູກພັນເພີ່ມຕື່ມ

ປະເທດສະມາຊິກ ອາດເຈລະຈາຂໍ້ຜູກພັນກ່ຽວກັບມາດຕະການທີ່ມີຜົນກະທົບຕໍ່ການຄ້າດ້ານການບໍລິການ ຊຶ່ງບໍ່ນອນຢູ່ໃນຕາຕະລາງ ພາຍໃຕ້ມາດຕາ 16 ຫຼື 17, ລວມທັງຂໍ້ຜູກພັນທີ່ກ່ຽວຂ້ອງກັບຄຸນສົມບັດ, ມາດຕະຖານ ຫຼື ເລື່ອງການອອກໃບອະນຸຍາດ. ຂໍ້ຜູກພັນດັ່ງກ່າວນີ້ ຈະຕ້ອງລະບຸໄວ້ໃນຕາຕະລາງຂອງປະເທດສະມາຊິກ.

## ພາກທີ 4

## ການເປີດເສລີແບບກ້າວໜ້າເປັນລຳດັບ

### ມາດຕາ XIX

### ການເຈລະຈາຂໍ້ຜູກພັນສະເພາະ

1. ໃນການປະຕິບັດຈຸດປະສົງຂອງສັນຍາສະບັບນີ້, ປະເທດສະມາຊິກຈະຕ້ອງເຂົ້າຮ່ວມການເຈລະຈາໃນຮອບຕໍ່ໆໄປ, ຊຶ່ງຈະເລີ່ມຕົ້ນໃນເວລາທີ່ບໍ່ຊ້າກວ່າ 5 ປີ ເລີ່ມຈາກວັນທີ ທີ່ສັນຍາ WTO ມີຜົນບັງຄັບໃຊ້ ແລະ ຈະເຂົ້າຮ່ວມການເຈລະຈາເປັນໄລຍະໆ ຫຼັງຈາກນັ້ນ, ເພື່ອໃຫ້ບັນລຸເຖິງລະດັບການເປີດເສລີທີ່ເພີ່ມຂຶ້ນແບບກ້າວໜ້າເປັນລຳດັບ, ການເຈລະຈາດັ່ງກ່າວຈະແນໃສ່ການຫຼຸດຜ່ອນ ຫຼື ລົບລ້າງຜົນກະທົບທີ່ມີຜົນເສຍຫາຍຕໍ່ການຄ້າດ້ານການບໍລິການຂອງມາດຕະການຕ່າງໆ ເພື່ອເປັນວິທີການທີ່ຈະໃຫ້ມີການເຂົ້າສູ່ຕະຫຼາດທີ່ມີປະສິດທິພາບ, ຂະບວນວິວັດນີ້ ຈະມີຂຶ້ນເພື່ອສົ່ງເສີມຜົນປະໂຫຍດຂອງຜູ້ເຂົ້າຮ່ວມເຈລະຈາທັງປວງ ບົນພື້ນຖານຂອງຜົນປະໂຫຍດຮ່ວມກັນ ແລະ ເພື່ອຮັກສາຄວາມສົມດຸນລວມຂອງສິດທິ ແລະ ພັນທະ.

2. ຂັ້ນຕອນການເປີດເສລີຈະມີຂຶ້ນໂດຍເປັນໄປຕາມວັດຖຸປະສົງຂອງນະໂຍບາຍແຫ່ງຊາດ ແລະ ລະດັບການພັດທະນາຂອງແຕ່ລະປະເທດສະມາຊິກ, ທັງໃນຂະແໜງການຕ່າງໆໂດຍລວມ ແລະ ໃນແຕ່

---

[124] ຂໍ້ຜູກພັນສະເພາະທີ່ກຳນົດໄວ້ຕາມມາດຕານີ້ ຈະບໍ່ຕີຄວາມໝາຍໃຫ້ປະເທດສະມາຊິກຕ້ອງໃຫ້ການຊົດເຊີຍແກ່ການເສຍປຽບໃນການແຂ່ງຂັນໃນຕົວເອງ ຊຶ່ງເປັນຜົນຈາກການມີລັກສະນະຕ່າງຊາດຂອງການບໍລິການ ຫຼື ຜູ້ໃຫ້ການບໍລິການທີ່ກ່ຽວຂ້ອງ.

ລະຂະແໜງການ. ນອກນັ້ນ, ຕ້ອງມີການໂຍະຍານທີ່ເໝາະສົມສຳລັບປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ທີ່ຈະເປີດເສລີສຳລັບຂະແໜງການທີ່ໜ້ອຍກວ່າ, ເປີດເສລີຮູບແບບທຸລະກິດໜ້ອຍປະເພດກວ່າ, ຂະຫຍາຍການເຂົ້າສູ່ຕະຫຼາດແບບກ້າວໜ້າເປັນລຳດັບ ໂດຍສອດຄ່ອງກັບສະພາບການພັດທະນາຂອງຕົນ, ແລະ ເມື່ອໄດ້ມີການເປີດຕະຫຼາດໃຫ້ແກ່ຜູ້ໃຫ້ການບໍລິການຕ່າງຊາດແລ້ວ, ໃຫ້ປະຕິບັດຕາມເງື່ອນໄຂການເປີດຕະຫຼາດເພື່ອໃຫ້ບັນລຸຕາມເປົ້າໝາຍທີ່ໄດ້ກ່າວເຖິງໃນມາດຕາ 4.

3. ສຳລັບການເຈລະຈາແຕ່ລະຮອບ, ຈະມີການກຳນົດທິດຊີ້ນຳ ແລະ ຂັ້ນຕອນດຳເນີນການໃນການເຈລະຈາ, ເພື່ອຈຸດປະສົງໃນການກຳນົດທິດຊີ້ນຳນັ້ນ, ສະພາການຄ້າດ້ານການບໍລິການຈະດຳເນີນການປະເມີນຜົນກ່ຽວກັບການຄ້າດ້ານການບໍລິການ ຕາມເງື່ອນໄຂໂດຍລວມ ແລະ ໃນແຕ່ລະຂະແໜງການຕາມຈຸດປະສົງຂອງສັນຍາສະບັບນີ້, ລວມທັງຈຸດປະສົງທີ່ລະບຸໄວ້ໃນວັກ 1 ຂອງມາດຕາ 4. ທິດຊີ້ນຳ ກ່ຽວກັບການເຈລະຈາຈະຕ້ອງກຳນົດຮູບແບບສຳລັບການປະຕິບັດຕໍ່ການເປີດເສລີ ຊຶ່ງປະເທດສະມາຊິກໄດ້ດຳເນີນການໂດຍອັດຕະໂນມັດຕັ້ງແຕ່ການເຈລະຈາໃນຮອບທີ່ຜ່ານມາ, ແລະການປະຕິບັດ ແບບພິເສດຕໍ່ປະເທດສະມາຊິກທີ່ເປັນປະເທດດ້ອຍພັດທະນາພາຍໃຕ້ບົດບັນຍັດຂອງວັກ 3 ມາດຕາ 4.

4. ຂັ້ນຕອນການເປີດເສລີແບບກ້າວໜ້າເປັນລຳດັບ ຈະຕ້ອງມີຄວາມຄືບໜ້າໃນການເຈລະຈາແຕ່ລະຮອບດັ່ງກ່າວ ໂດຍຜ່ານການເຈລະຈາສອງຝ່າຍ ແລະ ຫຼາຍຝ່າຍ ທີ່ແນໃສ່ເພີ່ມລະດັບທົ່ວໄປຂອງຂໍ້ຜູກພັນສະເພາະ ທີ່ປະຕິບັດໂດຍປະເທດສະມາຊິກ ພາຍໃຕ້ສັນຍາສະບັບນີ້.

**ມາດຕາ XX**

**ຕາຕະລາງຂໍ້ຜູກພັນສະເພາະ**

1. ແຕ່ລະປະເທດສະມາຊິກ ຈະລະບຸຂໍ້ຜູກພັນສະເພາະທີ່ຕົນຈະປະຕິບັດໄວ້ໃນຕາຕະລາງພາຍໃຕ້ພາກ III ຂອງສັນຍາສະບັບນີ້, ກ່ຽວກັບຂະແໜງການຊຶ່ງຈະໄດ້ມີການປະຕິບັດຂໍ້ຜູກພັນດັ່ງກ່າວນັ້ນ, ໃນຕາຕະລາງແຕ່ລະສະບັບ ຈະລະບຸ:

(ກ) ຮູບແບບ, ຂໍ້ຈຳກັດ ແລະ ເງື່ອນໄຂວ່າດ້ວຍການເຂົ້າສູ່ຕະຫຼາດ;

(ຂ) ເງື່ອນໄຂ ແລະ ຄຸນວຸດທິ ວ່າດ້ວຍການປະຕິບັດແບບພາຍໃນຊາດ;

(ຄ) ວຽກງານກ່ຽວກັບຂໍ້ຜູກພັນເພີ່ມເຕີມ;

(ງ) ຂອບຂ່າຍເວລາໃນການປະຕິບັດຕາມຂໍ້ຜູກພັນດັ່ງກ່າວ ຕາມທີ່ເໝາະສົມ; ແລະ

(ຈ) ວັນທີທີ່ຂໍ້ຜູກພັນດັ່ງກ່າວ ຈະມີຜົນບັງຄັບໃຊ້.

2. ບັນດາມາດຕະການຊຶ່ງບໍ່ສອດຄ່ອງກັບທັງ ມາດຕາ 16 ແລະ 17 ຈະລະບຸໄວ້ໃນຊ່ອງທີ່ພົວພັນເຖິງມາດຕາ 16 ໃນກໍລະນີນີ້ ການລະບຸດັ່ງກ່າວ ຍັງຖືວ່າເປັນການກຳນົດເງື່ອນໄຂ ຫຼື ຄຸນວຸດທິ ຕາມມາດຕາ 17.

3. ຕາຕະລາງຂໍ້ຜູກພັນສະເພາະ ຈະປະກອບເປັນເອກະສານຊ້ອນທ້າຍຂອງສັນຍາສະບັບນີ້ ແລະ ຈະຖືເປັນພາກສ່ວນໜຶ່ງຂອງສັນຍາສະບັບນີ້.

**ມາດຕາ XXI**

**ການດັດແກ້ຕາຕະລາງ**

1. (ກ) ປະເທດສະມາຊິກ (ໃນມາດຕານີ້ ເອີ້ນວ່າ " ປະເທດສະມາຊິກທີ່ດັດແກ້ ") ອາດດັດແກ້ ຫຼື ຖອນຂໍ້ຜູກພັນໃດໃນຕາຕະລາງຂອງຕົນໄດ້ທຸກເວລາ ພາຍຫຼັງ 3 ປີ ຫຼັງຈາກຂໍ້ຜູກພັນນັ້ນມີຜົນບັງຄັບໃຊ້, ໂດຍສອດຄ່ອງກັບບັດບັນຍັດຂອງມາດຕານີ້.

ຂ) ປະເທດສະມາຊິກທີ່ດັດແກ້ ຈະແຈ້ງເຈດຕະນາຂອງຕົນທີ່ດັດແກ້ ຫຼື ຖອນຂໍ້ຜູກພັນຕາມມາດຕານີ້ ຕໍ່ສະພາການຄ້າດ້ານການບໍລິການ ໃນເວລາບໍ່ຊ້າກວ່າ 3 ເດືອນ ກ່ອນວັນທີທີ່ມີຄວາມປະສົງຈະໃຫ້ມີການປະຕິບັດຕາມການດັດແກ້ ຫຼື ການຖອນດັ່ງກ່າວ.

2. (ກ) ຕາມຄໍາສະເໜີຂອງປະເທດສະມາຊິກໃດໜຶ່ງ ຊຶ່ງມີຜົນປະໂຫຍດພາຍໃຕ້ສັນຍາສະບັບນີ້ ອາດໄດ້ຮັບຜົນກະທົບ(ມາດຕານີ້ ເອີ້ນວ່າ"ປະເທດສະມາຊິກທີ່ໄດ້ຮັບຜົນກະທົບ") ຈາກຂໍ້ສະເໜີດັດແກ້ ຫຼື ຖອນ ທີ່ໄດ້ແຈ້ງພາຍໃຕ້ວັກຍ່ອຍ 1 (ຂ) ປະເທດສະມາຊິກທີ່ດັດແກ້ຈະເຂົ້າຮ່ວມເຈລະຈາ ເພື່ອຈະຕົກລົງກ່ຽວກັບການປັບຄ່າຊົດເຊີຍຕ່າງໆທີ່ຈໍາເປັນ. ໃນການເຈລະຈາ ແລະ ການຕົກລົງດັ່ງກ່າວນັ້ນ, ປະເທດສະມາຊິກທີ່ກ່ຽວຂ້ອງຈະພະຍາຍາມຮັກສາລະດັບທົ່ວໄປຂອງຂໍ້ຜູກພັນທີ່ເປັນປະໂຫຍດຮ່ວມກັນ ຊຶ່ງເປັນການໃຫ້ປະໂຫຍດຕໍ່ການຄ້າທີ່ບໍ່ດ້ອຍໄປກວ່າທີ່ກໍານົດໄວ້ໃນຕາຕະລາງຂໍ້ຜູກພັນສະເພາະ ກ່ອນການເຈລະຈາດັ່ງກ່າວ.

(ຂ) ການປັບຄ່າຊົດເຊີຍຈະປະຕິບັດຕາມຫຼັກການຂອງຊາດທີ່ໄດ້ຮັບການອະນຸເຄາະຫຼາຍທີ່ສຸດ.

3. (ກ) ຖ້າປະເທດສະມາຊິກທີ່ດັດແກ້ ແລະ ປະເທດສະມາຊິກທີ່ໄດ້ຮັບຜົນກະທົບບໍ່ສາມາດຕົກລົງກັນໄດ້ ກ່ອນສິ້ນສຸດໄລຍະເວລາທີ່ກໍານົດໄວ້ ສໍາລັບການເຈລະຈາ, ປະເທດສະມາຊິກທີ່ໄດ້ຮັບຜົນກະທົບ ອາດສະເໜີບັນຫາຕໍ່ສານໄກ່ເກ່ຍ, ປະເທດສະມາຊິກອື່ນ ທີ່ໄດ້ຮັບຜົນກະທົບຊຶ່ງມີຄວາມປະສົງຈະບັງຄັບໃຊ້ສິດທິທີ່ຕົນອາດມີ ໃນການໄດ້ຮັບຄ່າຊົດເຊີຍ ຈະຕ້ອງເຂົ້າຮ່ວມການໄກ່ເກ່ຍ.

(ຂ) ຖ້າປະເທດສະມາຊິກທີ່ໄດ້ຮັບຜົນກະທົບຫາກບໍ່ສະເໜີໃຫ້ມີການໄກ່ເກ່ຍ, ປະເທດສະມາຊິກທີ່ດັດແກ້ຈະມີອິດສະຫຼະ ໃນການດໍາເນີນການຕາມການດັດແກ້ ຫຼື ການຖອນທີ່ໄດ້ສະເໜີໄວ້ນັ້ນ.

4. (ກ) ປະເທດສະມາຊິກທີ່ດັດແກ້ອາດບໍ່ດັດແກ້ ຫຼືຖອນຂໍ້ຜູກພັນຂອງຕົນ ຈົນກວ່າຕົນຈະໄດ້ປັບຄ່າຊົດເຊີຍ ໂດຍສອດຄ່ອງກັບຜົນການພິຈາລະນາຂອງການໄກ່ເກ່ຍ.

(ຂ) ຖ້າປະເທດສະມາຊິກທີ່ດັດແກ້ປະຕິບັດຕາມການດັດແກ້ ຫຼືການຖອນທີ່ຕົນສະເໜີ ແລະ ບໍ່ດໍາເນີນການຕາມຜົນການພິຈາລະນາຂອງການໄກ່ເກ່ຍ, ປະເທດສະມາຊິກທີ່ໄດ້ຮັບຜົນກະທົບທີ່ເຂົ້າຮ່ວມການໄກ່ເກ່ຍ ອາດດັດແກ້ ຫຼື ຖອນໂດຍພື້ນຖານຜົນປະໂຫຍດທີ່ເທົ່າທຽມກັນ ຊຶ່ງສອດຄ່ອງກັບຜົນການພິຈາລະນາເຫຼົ່ານັ້ນ. ການດັດແກ້ ຫຼື ການຖອນຜົນປະໂຫຍດດັ່ງກ່າວ ອາດປະຕິບັດໄດ້ສະເພາະແຕ່ກັບປະເທດສະມາຊິກທີ່ດັດແກ້ນັ້ນ ໂດຍບໍ່ຄໍານຶງເຖິງ ມາດຕາ 2.

5. ສະພາການຄ້າດ້ານການບໍລິການ ຈະກໍານົດຂັ້ນຕອນການດໍາເນີນການ ສໍາລັບການປັບປຸງ ຫຼື ການດັດແກ້ຕາຕະລາງ. ປະເທດສະມາຊິກໃດຊຶ່ງໄດ້ດັດແກ້ ຫຼື ຖອນຂໍ້ຜູກພັນໃນຕາຕະລາງພາຍໃຕ້ມາດຕານີ້ ຈະດັດແກ້ຕາຕະລາງຂອງຕົນຕາມຂັ້ນຕອນດໍາເນີນການດັ່ງກ່າວນັ້ນ.

# ພາກທີ V

## ບົດບັນຍັດວ່າດ້ວຍສະຖາບັນ

### ມາດຕາ XXII

### ການປຶກສາຫາລື

1. ແຕ່ລະປະເທດສະມາຊິກ ຈະໃຫ້ການພິຈາລະນາດ້ວຍຄວາມເຫັນໃຈ, ແລະ ຈະໃຫ້ໂອກາດທີ່ພຽງພໍ ສຳລັບການປຶກສາຫາລື ກ່ຽວກັບຄຳສະເໜີທີ່ປະເທດສະມາຊິກອື່ນໃດໜຶ່ງ ໄດ້ດຳເນີນການກ່ຽວກັບເລື່ອງໃດໜຶ່ງ ຊຶ່ງມີຜົນກະທົບຕໍ່ການດຳເນີນການຕາມສັນຍາສະບັບນີ້. ຄວາມເຂົ້າໃຈກ່ຽວກັບການແກ້ໄຂຂໍ້ຂັດແຍ້ງ (DSU) ຈະນຳມາໃຊ້ກັບການປຶກສາຫາລືນັ້ນ.

2. ຕາມຄຳສະເໜີຂອງປະເທດສະມາຊິກ, ສະພາການຄ້າດ້ານການບໍລິການ ຫຼື ອົງການແກ້ໄຂຂໍ້ຂັດແຍ້ງ (DSB) ອາດປຶກສາຫາລືກັບປະເທດສະມາຊິກໃດໜຶ່ງ ຫຼື ບັນດາປະເທດສະມາຊິກກ່ຽວກັບເລື່ອງໃດໆ ຊຶ່ງບໍ່ອາດແກ້ໄຂໄດ້ຢ່າງໜ້າພໍໃຈ ຈາກການປຶກສາຫາລື ພາຍໃຕ້ ວັກ 1.

3. ປະເທດສະມາຊິກຈະຕ້ອງບໍ່ນຳໃຊ້ມາດຕາ 17, ບໍ່ວ່າຈະຢູ່ພາຍໃຕ້ມາດຕານີ້ ຫຼື ມາດຕາ XXIII ທີ່ກ່ຽວຂ້ອງກັບມາດຕະການຂອງປະເທດສະມາຊິກອື່ນ ຊຶ່ງຢູ່ໃນຂອບເຂດຂອງສັນຍາລະຫວ່າງປະເທດທີ່ມີລະຫວ່າງກັນ ກ່ຽວກັບການຫຼີກລ້ຽງການເກັບອາກອນຊໍ້າຊ້ອນ. ໃນກໍລະນີທີ່ມີຄວາມຂັດແຍ້ງລະຫວ່າງປະເທດສະມາຊິກ ທີ່ວ່າ ມາດຕະການນັ້ນຢູ່ພາຍໃນຂອບເຂດຂອງສັນຍາທີ່ມີລະຫວ່າງກັນ ຫຼືບໍ່, ປະເທດສະມາຊິກຝ່າຍໃດຝ່າຍໜຶ່ງມີສິດນຳເລື່ອງນີ້ ສະເໜີສະພາການຄ້າດ້ານການບໍລິການໄດ້[125]. ສະພາຈະສະເໜີເລື່ອງເຖິງອົງການໄກ່ເກ່ຍ. ຄຳຊີ້ຂາດຂອງອົງການໄກ່ເກ່ຍ ຈະຖືເປັນຜົນຕັດສິນສຸດທ້າຍ ແລະ ຈະມີຂໍ້ຜູກມັດຕໍ່ປະເທດສະມາຊິກ.

### ມາດຕາ XXIII

### ການແກ້ໄຂຂໍ້ຂັດແຍ້ງ ແລະ ການບັງຄັບການຈັດຕັ້ງປະຕິບັດ

1. ຖ້າປະເທດສະມາຊິກໃດພິຈາລະນາເຫັນວ່າ ປະເທດສະມາຊິກອື່ນໃດໜຶ່ງ ບໍ່ປະຕິບັດຕາມພັນທະ ຫຼື ຂໍ້ຜູກພັນສະເພາະພາຍໃຕ້ສັນຍາສະບັບນີ້, ປະເທດສະມາຊິກນັ້ນສາມາດຂໍຄວາມຊ່ວຍເຫຼືອຈາກ DSU ເພື່ອໃຫ້ບັນລຸວິທີການແກ້ໄຂຊຶ່ງເປັນທີ່ພໍໃຈຮ່ວມກັນໃນເລື່ອງນີ້.

2. ຖ້າ DSB ພິຈາລະນາເຫັນວ່າ ສະພາບການມີຄວາມຮຸນແຮງສຳລັບຍັ້ງຢືນຕໍ່ການດຳເນີນການນັ້ນ, DSB ອາດອະນຸມັດໃຫ້ປະເທດສະມາຊິກ ຫຼື ບັນດາປະເທດສະມາຊິກ ລະງັບການປະຕິບັດຕາມພັນທະ ແລະ ຂໍ້ຜູກພັນສະເພາະທີ່ມີ ຕໍ່ປະເທດສະມາຊິກອື່ນໃດໜຶ່ງໄດ້ ຕາມມາດຕາ 22 ຂອງ DSU.

3. ຖ້າປະເທດສະມາຊິກໃດພິຈາລະນາເຫັນວ່າ ຜົນປະໂຫຍດໃດທີ່ຕົນສາມາດຄາດຫວັງຢ່າງມີເຫດຜົນວ່າຈະເກີດຂຶ້ນກັບຕົນ ພາຍໃຕ້ຂໍ້ຜູກພັນສະເພາະຂອງປະເທດສະມາຊິກອື່ນ ຕາມພາກ III ຂອງສັນຍາສະບັບນີ້ ກຳລັງຈະຖືກລົບລ້າງໄປ ຫຼື ກຳລັງໄດ້ຮັບຄວາມເສຍຫາຍອັນເນື່ອງມາຈາກການໃຊ້

---

[125] ກ່ຽວກັບສັນຍາວ່າດ້ວຍການຫຼີກລ້ຽງການເກັບອາກອນຊໍ້າຊ້ອນ ຊຶ່ງມີຢູ່ໃນວັນທີ ທີ່ສັນຍາ WTO ມີຜົນບັງຄັບໃຊ້, ເລື່ອງດັ່ງກ່າວອາດນຳຂຶ້ນສະເໜີ ຕໍ່ສະພາການຄ້າດ້ານການບໍລິການ ພຽງແຕ່ເມື່ອຄູ່ສັນຍາທັງ 2 ຝ່າຍ ຍິນດີຕາມສັນຍານັ້ນ.

